ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາລານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

23-30 ພະຈິກ 2024
ປີທີ 13
ສະບັບທີ 995
ລາຍສັບປະດາ

## ສູນທອນພົດ
### ປະທານສະພາແຫ່ງຊາດ ກ່າວໄຂກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX

(ສພຊ) - ໃນພິທີເປີດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX, ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ໄດ້ກ່າວສູນທອນພົດໄຂກອງປະຊຸມວ່າ: ມື້ນີ້, ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ໄດ້ໄຂຂຶ້ນຢ່າງເປັນທາງການໃນທ່າມກາງບັນຍາກາດທີ່ທົ່ວພັກ-ລັດ, ທົ່ວກຳລັງປະກອບອາວຸດ ແລະ ທົ່ວປວງຊົນລາວທັງຊາດ ພວມສຸມໃສ່ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ, ກອງປະຊຸມຄົບຄະນະຄັ້ງທີ 9 ຂອງຄະນະບໍລິຫານງານສູນກາງພັກສະໄໝທີ IX, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງລັດ 5 ປີ ຄັ້ງທີ IX ໄລຍະທ້າຍສະໄໝ ແລະ ພວມຈັດຕັ້ງຜັນຂະຫຍາຍຜົນສຳເລັດຢ່າງຈົບງາມຂອງການເປັນເຈົ້າພາບກອງ

ອ່ານຕໍ່ໜ້າ 3

## ກອງປະຊຸມສະໄໝສາມັນເທື່ອທີ 8 ໄຂຂຶ້ນຢ່າງເປັນທາງການ






ອ່ານຕໍ່ໜ້າ 3

## ຄາດຄະເນໝົດປີ GDP ຈະຂະຫຍາຍຕົວບັນລຸໄດ້ຕາມແຜນ 4.5%



ອີງຕາມການລາຍງານຂອງທ່ານນາຍົກລັດຖະມົນຕີ ສອນໄຊ ສີພັນດອນ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ ປະຈຳປີ 2024 ແລະ ແຜນການ ປະຈຳປີ 2025 ຕິດພັນກັບວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ; ແຜນການລົງທຶນຂອງລັດ ປະຈຳປີ 2025, ແຜນຈັດສັນງົບປະມານໃຫ້ກະຊວງ-ອົງການ ແລະ ທ້ອງຖິ່ນ ປະຈຳປີ 2025; ການດັດແກ້ງົບປະມານແຫ່ງລັດ ປະຈຳປີ 2024 ໂດຍສະເພາະວຽກງານເສດຖະກິດ ໄດ້ສຸມໃສ່ຈັດຕັ້ງປະຕິບັດບັນດາຕົວເລກຄາດໝາຍ ແລະ ມາດຕະການຕ່າງໆຕາມມະຕິກອງປະຊຸມ

ອ່ານຕໍ່ໜ້າ 4

## ຮອງປະທານສະພາແຫ່ງຊາດ ພົບປະພີ່ນ້ອງເຊື້ອຊາດລາວຢູ່ຕ່າງປະເທດ




(ສພຊ) - ຕອນເຊົ້າວັນທີ 13 ພະຈິກນີ້ ທີ່ສະພາແຫ່ງຊາດ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ໄດ້ຕ້ອນຮັບ ແລະ ພົບປະພີ່ນ້ອງເຊື້ອຊາດລາວຈາກຕ່າງປະເທດ ທີ່ເດີນທາງມາຢ້ຽມຢາມ ແລະ ເຂົ້າຮ່ວມກອງປະຊຸມພົບປະພີ່ນ້ອງເຊື້ອຊາດລາວຄັ້ງປະຖົມມະລຶກ ພາຍໃຕ້ຫົວຂໍ້ "ຮັກບ້ານເກີດ" ທີ່ຈັດຂຶ້ນເມື່ອວັນທີ 12 ພະຈິກຜ່ານມາ.

ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ສະແດງຄວາມຍິນດີຕ້ອນຮັບພີ່ນ້ອງເຊື້ອຊາດລາວຈາກຕ່າງປະເທດຢ່າງຈິງໃຈທັງໄດ້ຕີລາຄາສູງຕໍ່ການຢ້ຽມຢາມພົບປະບ້ານເກີດຂອງຊາວລາວເຊື້ອຊາດລາວໃນຄັ້ງນີ້ ເຊິ່ງເປັນໂອກາດອັນດີໃຫ້ຊາວລາວຢູ່ຕ່າງປະເທດໄດ້ມາເຫັນຍາດພີ່ນ້ອງ ແລະການພັດທະນາຂອງປະເທດຊາດ; ທ່ານຮອງປະທານສະພາແຫ່ງຊາດ ໄດ້ແຈ້ງໃຫ້ພີ່ນ້ອງຊາວລາວຊາບວ່າ: ລັດຖະບານ ສປປ

ອ່ານຕໍ່ໜ້າ 2

## ຄະນະປະຈຳສະພາແຫ່ງຊາດ ສະເໜີລັດຖະບານເອົາໃຈໃສ່ 13 ມາດຕະການ



ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດຄາດໝາຍທິດທາງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ປະຈຳປີ 2025 ຕິດພັນກັບວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ, ທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ ສະເໜີໃຫ້ລັດຖະບານເອົາໃຈໃສ່ບາງມາດຕະການເພີ່ມຕື່ມດັ່ງນີ້:

1. ເພີ່ມທະວີຄວາມເອົາໃຈໃສ່ຜັນຂະຫຍາຍມະຕິກົມ

ອ່ານຕໍ່ໜ້າ 8

## ຮັບຮອງການດັດແກ້ງົບປະມານແຫ່ງລັດປີ 2024



(ສພຊ) - ຜ່ານການພິຈາລະນາຢ່າງເລິກເຊິ່ງ ແລະ ກວ້າງຂວາງຂອງສະມາຊິກສະພາແຫ່ງຊາດ ຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບການດັດແກ້ແຜນງົບປະມານແຫ່ງລັດປີ 2024 ໃນວາລະການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊຸດທີ IX ເມື່ອຕອນບ່າຍວັນທີ 18 ພະຈິກນີ້ ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ, ກອງປະຊຸມໄດ້ເຫັນດີຕໍ່ການສະຫຼຸບຂາດຕົວງົບປະມານແຫ່ງລັດ ປະຈຳປີ 2023 ມີລາຍຮັບເກີນແຜນ 12,358.13 ຕື້ກີບ ແລະ ເງິນທີ່ປະຢັດໄດ້ 808.99 ຕື້ກີບ ລວມເປັນ 13,167.12 ຕື້ກີບ ໃນນີ້, ທົດແທນການຂາດດຸນ 6,513.04 ຕື້ກີບແລະດຸ່ນດ່ຽງການຊຳລະໜີ້ສິນພາຍໃນ ແລະ ຕ່າງປະເທດ ປີ 2023 ຈຳນວນ 995.21 ຕື້ກີບ ແລະ ປີ 2024 ຈຳນວນ 3,638.09 ຕື້ກີບເພື່ອຫຼຸດຜ່ອນການກູ້ຢືມໃໝ່, ສ່ວນທີ່ເຫຼືອ 2,020.78 ຕື້ກີບ ທີ່ເປັນພູດເງິນເກີນແຜນບ້ວງ 50% ຂອງທ້ອງຖິ່ນ ສະເໜີດັດແກ້ເຂົ້ານຳໃຊ້ໃນແຜນປີ 2024 ຕາມມະຕິສະພາແຫ່ງຊາດ ສະບັບເລກທີ 119/ສພຊ, ລົງວັນທີ 21 ພະຈິກ 2023; ພ້ອມນີ້, ຜ່ານການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ, ບັນດາຫົວໜ່ວຍທີ່ມີລາຍຮັບ-ລາຍຈ່າຍ ວິຊາການ ແລະ ກອງທຶນ ມີເງິນເພີ່ມຂຶ້ນ 941.45 ຕື້ກີບ ໃນນັ້ນ, ຂັ້ນສູນກາງ 712.43 ຕື້ກີບ (ກອງທຶນທາງ 150 ຕື້ກີບ) ແລະຂັ້ນທ້ອງຖິ່ນ 229.11 ຕື້ກີບ.

ກອງປະຊຸມເຫັນດີດັດແກ້ແຜນງົບປະມານແຫ່ງລັດ

ອ່ານຕໍ່ໜ້າ 2



ການຂຽນດ້ອຍມື... (ໜ້າ 8)



Moldova... (ໜ້າ 10)

ເຈາະເລິກໂລກ:... (ໜ້າ 11)

ເຫົ່າໄອ້ ໄດ້ຍິດຮຽນ
❖ ວິເສດ ສະແຫວງສຶກສາ
ປ້ອງກັນ... (ໜ້າ 11)

**ຊົມເຊີຍກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ຢ່າງສຸດໃຈ!**




## ຮັບຮອງ...

(ຕໍ່ຈາກໜ້າ 1)

ຕາມການສະເໜີຂອງລັດຖະບານ ດັ່ງນີ້:

1. ດັດແກ້ເພີ່ມລາຍຈ່າຍເງິນເກີນແຜນຂອງທ້ອງຖິ່ນຕາມຜົນການສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປີ2023ຈຳນວນ2,020.78 ຕື້ກີບ ທີ່ອະນຸຍາດໃຫ້ທ້ອງຖິ່ນນຳໃຊ້ເພື່ອໄປຊຳລະໜີ້ສິນບໍລິຫານແລະໂຄງການລົງທຶນຂອງລັດ (ບໍ່ອະນຸຍາດໃຫ້ຈັດຊື້ພາຫະນະບໍລິຫານ);

2. ດັດແກ້ເພີ່ມລາຍຮັບ-ລາຍຈ່າຍ ວິຊາການ ແລະ ກອງທຶນ ມີເງິນເພີ່ມຂຶ້ນ 941.45 ຕື້ກີບ ໃນນັ້ນ, ຂັ້ນສູນກາງ 712.43 ຕື້ກີບ (ກອງທຶນທາງ 150 ຕື້ກີບ) ແລະ ຂັ້ນທ້ອງຖິ່ນ 229.11 ຕື້ກີບ.

ພ້ອມນັ້ນ, ການຂຶ້ນແຜນງົບປະມານແຫ່ງລັດໃນຕໍ່ໜ້າໃຫ້ລັດຖະບານເອົາໃຈໃສ່ຂຸດຄົ້ນໃຫ້ໄດ້ທ່າແຮງແຫຼ່ງລາຍຮັບຕົວຈິງຢ່າງຄົບຖ້ວນ ແລະ ຂຶ້ນແຜນລາຍຈ່າຍໃຫ້ໃຫ້ສົມເຫດສົມຜົນຕາມທິດປະຢັດ ເພື່ອເຮັດໃຫ້ແຜນລາຍຮັບ-ລາຍຈ່າຍ ຖືກຕ້ອງ ແລະ ສອດຄ່ອງກັບຄວາມສາມາດຕົວຈິງ.

**(ນາງ ອາລິນ ສຸພົມມະປະດິດ)**



## ຮອງປະທານ...

(ຕໍ່ຈາກໜ້າ 1)

ລາວ ຖືພີ່ນ້ອງຊາວລາວເປັນພາກສ່ວນໜຶ່ງທີ່ບໍ່ສາມາດຕັດແຍກອອກຈາກວົງຄະນະຍາດລາວແຫ່ງຊາດລາວ ແລະ ໄດ້ສະແດງຄວາມຊົມເຊີຍທີ່ໃນໄລຍະຜ່ານມາ ຊາວລາວຢູ່ຕ່າງປະເທດໄດ້ມີການໄປມາຫາສູ່, ອວ່າຍໜ້າມາຫາປະເທດຊາດນັບມື້ນັບຫຼາຍ, ໄດ້ມີການດຳເນີນທຸລະກິດຢູ່ ສປປລາວ ເຊິ່ງເປັນການປະກອບສ່ວນພັດທະນາປະເທດຊາດໃຫ້ນັບມື້ນັບເຂັ້ມແຂງ, ທັງໄດ້ສະແດງຄວາມມຸ່ງຫວັງທີ່ຢາກໃຫ້ພີ່ນ້ອງຊາວລາວທັງພາຍໃນແລະຕ່າງປະເທດ ມີຄວາມຮັກແພງສາມັກຄີກັນ, ມີຄວາມທະນົງໃຈຕໍ່ການເປັນຄົນລາວ, ເຊື້ອຊາດລາວ, ມີຈິດໃຈຮັກບ້ານເກີດເມືອງນອນອັນສູງສົ່ງ, ປະກອບສ່ວນເຂົ້າໃນການພັດທະນາປະເທດຊາດໃຫ້ມີຄວາມຈະເລີນຮຸ່ງເຮືອງ; ພ້ອມກັນນັ້ນ, ກໍໄດ້ເຊີນຊວນພີ່ນ້ອງເຊື້ອຊາດລາວຢູ່ຕ່າງປະເທດ ມາຢ້ຽມຢາມຍາດຕິພີ່ນ້ອງ, ມາຢ້ຽມຢາມທ່ອງທ່ຽວ, ທັງຊອກໂອກາດມາລົງທຶນຢູ່ ສປປລາວ ໃຫ້ນັບມື້ຫຼາຍຂຶ້ນເລື້ອຍໆ.

ໃນເວລາພົບປະກັບຊາວລາວຄັ້ງນີ້, ໄດ້ມີພີ່ນ້ອງຊາວລາວ ຈຳນວນ 10 ກວ່າທ່ານ ໄດ້ມີການແລກປ່ຽນຄຳຄິດຄຳເຫັນ, ຄວາມຮູ້ສຶກຕໍ່ການມາຢ້ຽມຢາມໃນຄັ້ງນີ້ ແລະ ມີຄວາມປະສົງຢາກຈະກັບມາບ້ານເກີດ, ມາລົງທຶນ ແລະ ມາມີສ່ວນຮ່ວມໃນການພັດທະນາປະເທດຊາດ.

ທ່ານຮອງປະທານສະພາແຫ່ງຊາດ ໄດ້ສະແດງຄວາມຊົມເຊີຍຢ່າງຈິງໃຈຕໍ່ພີ່ນ້ອງເຊື້ອຊາດລາວຢູ່ຕ່າງປະເທດ ທີ່ໄດ້ປະກອບສ່ວນອັນສຳຄັນເຂົ້າໃນການສ້າງສາພັດທະນາປະເທດຊາດໃນໄລຍະຜ່ານມາ ທັງມີຄວາມມຸ່ງຫວັງເປັນຢ່າງຍິ່ງທີ່ຢາກໃຫ້ພີ່ນ້ອງເຊື້ອຊາດລາວຢູ່ຕ່າງປະເທດ ເຄື່ອນໄຫວດຳລົງຊີວິດຢ່າງໝັ້ນຄົງ, ຖືກຕ້ອງຕາມກົດໝາຍຂອງປະເທດທີ່ຕົນອາໄສຢູ່, ກໍ່ສ້າງຊີວິດການເປັນຢູ່ໃຫ້ດີ, ມີຄວາມທະນົງໃຈຕໍ່ການເປັນຄົນເຊື້ອຊາດລາວ, ມີນ້ຳໃຈຮັກຊາດຮັກບ້ານເກີດເມືອງນອນຂອງຕົນ, ສືບຕໍ່ຮັກມູນເຊື້ອວັດທະນະທຳຮີດຄອງປະເພນີອັນດີງາມຂອງຊາດລາວ ແລະສືບຕໍ່ມີສ່ວນຮ່ວມໃນການພັດທະນາປະເທດຊາດໃຫ້ມີຄວາມຈະເລີນຮຸ່ງເຮືອງຮັ່ງມີຂຶ້ນໄປເລື້ອຍໆ ຕາມເງື່ອນໄຂ ແລະ ຄວາມອາດສາມາດຂອງຕົນ.

**(ນາງ ອາລິນ ສຸພົມມະປະດິດ)**

# ຄະນະຜູ້ແທນລາວ ເຂົ້າຮ່ວມກອງປະຊຸມເວທີປຶກສາຫາລືວ່າດ້ວຍກົດໝາຍ ຈີນ-ອາຊຽນ




(ສພຊ) - ວັນທີ 10-14 ພະຈິກ 2024 ຄະນະຜູ້ແທນສະພາແຫ່ງຊາດ ນຳໂດຍທ່ານ ອຳໄພ ຈິດມານົບ ຮອງປະທານກຳມາທິການກົດໝາຍ ໄດ້ເຂົ້າຮ່ວມກອງປະຊຸມປຶກ ສາຫາລືວ່າດ້ວຍກົດໝາຍ ຈີນ-ອາຊຽນ ຄັ້ງທີ 6 ພາຍໃຕ້ຫົວຂໍ້ "ສົ່ງເສີມການຮ່ວມມືທາງດ້ານກົດໝາຍອາຊຽນ-ຈີນ" (Promoting China-ASEAN Legal Cooperation) ຈັດຂຶ້ນທີ່ນະຄອນສິງຊິ້ງ ສປຈີນ ເຊິ່ງມີຜູ້ເຂົ້າຮ່ວມຫຼາຍກວ່າ 200 ທ່ານ ທີ່ມາຈາກປະເທດອາຊຽນ ໃນນັ້ນມີຕາງໜ້າຈາກກະຊວງຕ່າງໆຂອງລັດຖະບານ, ອົງການນິຕິບັນຍັດ, ອົງການຕຸລາການ, ມະຫາວິທະຍາໄລ, ທະນາຍຄວາມ, ນັກກົດໝາຍ, ບໍລິສັດທີ່ປຶກສາທາງດ້ານກົດໝາຍ, ສະມາຄົມນັກກົດໝາຍຂອງຈີນ ແລະ ອາຊຽນ.

ກອງປະຊຸມໄດ້ເນັ້ນໜັກເຖິງຄວາມສຳຄັນຂອງເປົ້າໝາຍການພັດທະນາຮ່ວມກັນ, ຫຼັກການທາງດ້ານກົດໝາຍ (ຫຼັກນິຕິທຳ) ຕາມຂໍ້ລິເລີ່ມໜຶ່ງແລວໜຶ່ງເສັ້ນທາງ ແລະ ການສ້າງປະຊາຄົມຈີນ-ອາຊຽນ ທີ່ມີອະນາຄົດຮ່ວມກັນ; ບັນດາຜູ້ແທນໄດ້ປຶກສາຫາລືແລະແລກປ່ຽນກັນທາງດ້ານປະສົບການໃນການຮ່ວມມື, ການສະໜັບສະໜູນດ້ານລະບຽບກົດໝາຍລະຫວ່າງ ຈີນ-ອາຊຽນ ໃນຂົງເຂດການຮ່ວມມືທາງດ້ານເສດຖະກິດ, ການລົງທຶນແລະການຄ້າສາກົນ ຕາມລະບຽບກົດໝາຍ ເພື່ອໃຫ້ປະຊາຊົນ ແລະ ບັນດາປະເທດ ໃນແຖບໜຶ່ງແລວໜຶ່ງເສັ້ນທາງ ໄດ້ຮັບຜົນປະໂຫຍດຮ່ວມກັນ.

ຫົວໜ້າຄະນະຜູ້ແທນລາວໄດ້ຂຶ້ນມີຄຳເຫັນໃນກອງປະຊຸມ ເຊິ່ງຍົກໃຫ້ເຫັນເຖິງການຮ່ວມມືໃນໄລຍະຜ່ານມາ ຂອງ ສປປລາວ ແລະ ສປຈີນ ເວົ້າລວມ, ເວົ້າສະເພາະການຮ່ວມມືລະຫວ່າງສະພາແຫ່ງຊາດລາວ ແລະສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ໂດຍສະເພາະແມ່ນການສ້າງ, ປັບປຸງ ແລະການຈັດຕັ້ງປະຕິບັດກົດໝາຍຂອງ ສປປລາວ ທີ່ມີສ່ວນຮ່ວມສະໜັບສະໜູນ ແລະ ໄດ້ຮັບຜົນປະໂຫຍດຈາກໜຶ່ງແລວໜຶ່ງເສັ້ນທາງ ແລະ ການສ້າງ ສປປລາວ ໃຫ້ກາຍເປັນຈຸດຂອງການເຊື່ອມຈອດທາງບົກ-ທາງທະເລ; ພ້ອມກັນນັ້ນ, ກໍໄດ້ຍົກໃຫ້ເຫັນເຖິງຄວາມເອົາໃຈໃສ່ໃນການສ້າງ ແລະ ຈັດຕັ້ງປະຕິບັດກົດໝາຍ ທີ່ສະພາແຫ່ງຊາດລາວໄດ້ຍົກສູງບົດບາດຂອງຕົນທາງດ້ານນິຕິບັນຍັດ ໃນການຮັບຮອງເອົາກົດໝາຍເພື່ອເປັນເຄື່ອງມືຂອງລັດໃນການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍລະບຽບກົດໝາຍ ໂດຍການເອົາໃຈໃສ່ປັບປຸງ ແລະ ຮັບຮອງເອົາກົດໝາຍຕ່າງໆ ໃຫ້ມີຄວາມແທດເໝາະກັບສະພາບການຂອງປະເທດຕົນ, ສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປລາວ ເປັນພາຄີ ແລະ ໄດ້ມີການຖອດຖອນບົດຮຽນຈາກບັນດາປະເທດທີ່ພັດທະນາແລະບັນດາປະເທດອ້ອມຂ້າງ ເພື່ອສ້າງກົດໝາຍຂອງ ສປປລາວ ໃຫ້ມີຄວາມໃກ້ຄຽງ ແລະສາມາດຈັດຕັ້ງປະຕິບັດໄດ້ ຫຼືສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ພ້ອມທັງໄດ້ມີການຍົກສູງບົດບາດຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນແລະກົດໝາຍ ໃຫ້ເຂັ້ມແຂງ ແລະ ມີປະສິດທິພາບ.

ກອງປະຊຸມໄດ້ດຳເນີນໄປໃນບັນຍາກາດທີ່ທຸກຝ່າຍເຫັນດີເປັນເອກະພາບກັນ, ສືບຕໍ່ຮ່ວມມືກັນໃນການຊຸກຍູ້ສົ່ງເສີມທາງດ້ານກົດໝາຍ; ນອກນັ້ນ, ຍັງມີກອງປະຊຸມຍ່ອຍຄື: ກອງປະຊຸມເວທີປຶກສາຫາລືກ່ຽວກັບການຮ່ວມມືທາງດ້ານກົດໝາຍທາງບົກ ແລະ ທາງທະເລ ຕາເວັນຕົກໃໝ່ ລະຫວ່າງພາກພື້ນ, ກອງປະຊຸມເວທີປຶກສາຫາລືຂອງຄະນະບໍດີໂຮງຮຽນກົດໝາຍ ຈີນ-ອາຊຽນ ແລະ ກອງປະຊຸມເວທີປຶກສາຫາລືກ່ຽວກັບການຈັດເຝິກອົບຮົມຫົວຂໍ້ການແກ້ໄຂຂໍ້ຂັດແຍ້ງທາງການຄ້າລະຫວ່າງປະເທດທີ່ມີຄວາມຫຼາກຫຼາຍ.

ນອກຈາກນີ້, ຄະນະຜູ້ແທນລາວຍັງໄດ້ປະຊຸມຮ່ວມກັບສູນຄົ້ນຄວ້າກົດໝາຍ ຈີນ-ອາຊຽນ ນຳໂດຍທ່ານ ຈາງ ສຽວຈຸນ (Zhang Xiaojun) ຫົວໜ້າສູນຄົ້ນຄວ້າກົດໝາຍ ຈີນ-ອາຊຽນ, ຮອງອະທິການບໍດີມະຫາວິທະຍາໄລການປົກຄອງ ແລະ ນິຕິສາດ ຕາເວັນອອກສຽງໃຕ້ ຂອງນະຄອນສິງຊິ້ງ ພ້ອມດ້ວຍຄະນະ ເພື່ອປຶກສາຫາລືກ່ຽວກັບການຮ່ວມມືກັນໃນການສ້າງບຸຄະລາກອນ, ການສະໜອງຂໍ້ມູນທາງດ້ານນິຕິກຳ, ການແລກປ່ຽນຂໍ້ມູນຂ່າວສານ ແລະ ປະສົບການໃນການສ້າງ ແລະປັບປຸງບັນດານິຕິກຳຕ່າງໆຂອງລາວ-ຈີນໃນໄລຍະຜ່ານມາ ໂດຍໄດ້ເນັ້ນໜັກເຖິງການສ້າງບຸກຄະລາກອນໃນຂົງເຂດກົດໝາຍ ໃຫ້ແກ່ພະນັກງານຂອງສະພາແຫ່ງຊາດລາວ ເຊິ່ງສູນຄົ້ນຄວ້າກົດໝາຍຈີນ-ອາຊຽນ ມີຄວາມຍິນດີຈະໃຫ້ການສະໜັບສະໜູນທາງດ້ານທຶນຮອນ ແລະ ການຮ່ວມມືກັບສະພາແຫ່ງຊາດລາວ ໃນການສົ່ງບຸຄະລາກອນທາງດ້ານກົດໝາຍທີ່ຕ້ອງການໄປຍົກລະດັບການສຶກສາ, ການແລກປ່ຽນບົດຮຽນ, ການເຝິກອົບຮົມໄລຍະສັ້ນແລະການຍົກລະດັບປະລິນຍາເອກໃນສາຍກົດໝາຍຢູ່ມະຫາວິທະຍາໄລການປົກຄອງ ແລະ ນິຕິສາດ ຕາເວັນອອກສຽງໃຕ້ ແລະ ສູນຄົ້ນຄວ້າກົດໝາຍ ຈີນ-ອາຊຽນ.

ຄະນະຜູ້ແທນລາວຍັງໄດ້ພົບປະສອງຝ່າຍກັບທ່ານ ຫວັງ ຫົງຊຽງ (Wang Hongxiang) ເລຂາທິການພັກສະມາຄົມກົດໝາຍຈີນ, ຮອງປະທານຄະນະກຳມາທິການການສ້າງລັດຖະທຳມະນູນ ແລະ ກົດໝາຍ, ຄະນະປະຈຳສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ຊຸດທີ XIV; ໃນການພົບປະຄັ້ງນີ້ ໄດ້ມີການແລກປ່ຽນກ່ຽວກັບການປັບປຸງລັດຖະທຳມະນູນ, ການສ້າງ ແລະ ປັບປຸງກົດໝາຍຂອງ ຈີນ-ລາວ ໃນໄລຍະຜ່ານມາ ແລະ ຝ່າຍ ສປຈີນ ມີຄວາມຍິນດີຈະສະໜອງຂໍ້ມູນກ່ຽວກັບການປັບປຸງລັດຖະທຳມະນູນຂອງຕົນ.



## ກອງປະຊຸມ...

(ຕໍ່ຈາກໜ້າ 1)

(ສພຊ) - ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ໄດ້ໄຂຂຶ້ນຢ່າງເປັນທາງການ ໃນຕອນເຊົ້າວັນຈັນທີ 18 ພະຈິກນີ້ ທີ່ຫ້ອງປະຊຸມໃຫຍ່ສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ; ເຂົ້າຮ່ວມມີທ່ານທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ປະທານປະເທດ; ບັນດາທ່ານການນຳຂັ້ນສູງ ແລະ ອະດີດການນຳຂັ້ນສູງຂອງພັກ-ລັດ, ທ່ານ ສອນໄຊ ສີພັນດອນ ກຳມະການກົມການເມືອງສູນກາງພັກ, ນາຍົກລັດຖະມົນຕີ ແລະ ບັນດາທ່ານສະມາຊິກລັດຖະບານ, ບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ຈາກ 18 ເຂດເລືອກຕັ້ງທົ່ວປະເທດ, ບັນດາທ່ານທູຕານຸທູດ, ຕາງໜ້າອົງການຈັດຕັ້ງສາກົນປະຈຳສປປລາວແລະແຂກຖືກເຊີນ.

ພາຍຫຼັງທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ກ່າວສູນທອນພິດເປີດກອງປະຊຸມຢ່າງເປັນທາງການ. ກອງປະຊຸມໄດ້ຮັບຟັງບົດລາຍງານຂອງທ່ານນາຍົກລັດຖະມົນຕີ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ ປະຈຳປີ 2024 ແລະ ແຜນການປະຈຳປີ 2025 ຕິດພັນກັບວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ; ແຜນການລົງທຶນຂອງລັດປະຈຳປີ 2025, ແຜນຈັດສັນງົບປະມານໃຫ້ກະຊວງ, ອົງການຂັ້ນສູນກາງ ແລະ ບັນດາແຂວງ ປະຈຳປີ 2025; ການສະເໜີດັດແກ້ແຜນງົບປະມານແຫ່ງລັດປະຈຳປີ 2024. ທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ ກໍໄດ້ປະກອບຄຳເຫັນຕໍ່ບົດລາຍງານຂອງທ່ານນາຍົກລັດຖະມົນຕີ.

ກອງປະຊຸມຄັ້ງນີ້ຍັງໄດ້ຜ່ານມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາການຍົກຍ້າຍ ແລະ ແຕ່ງຕັ້ງສະມາຊິກລັດຖະບານເຊິ່ງໄດ້ຍົກຍ້າຍທ່ານ ສະເຫຼີມໄຊ ກົມມະສິດ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການຕ່າງປະເທດ ໄປປະຈຳຢູ່ສຳນັກງານນາຍົກລັດຖະມົນຕີ ໃນຖານະຮອງນາຍົກລັດຖະມົນຕີ ເພື່ອຮັບຜິດຊອບວຽກງານຂອງລັດຖະບານ; ແຕ່ງຕັ້ງທ່ານ ທອງສະຫວັນ ພົມວິຫານ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ເປັນລັດຖະມົນຕີກະຊວງການຕ່າງປະເທດ.

ກອງປະຊຸມໄດ້ສືບຕໍ່ຮັບຟັງບົດລາຍງານກ່ຽວກັບແຜນການລົງທຶນຂອງລັດປະຈຳປີ 2025 ຈາກທ່ານເພັດ ພົມພິພັກ ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ; ບົດລາຍງານກ່ຽວກັບແຜນການຈັດສັນງົບປະມານແຫ່ງລັດ ໃຫ້ກະຊວງ, ອົງການຂັ້ນສູນກາງ ແລະ ບັນດາແຂວງ ປະຈຳປີ 2025; ການສະເໜີດັດແກ້ງົບປະມານແຫ່ງລັດປີ 2024 ຈາກທ່ານ ສັນຕິພາບ ພົມວິຫານ ລັດຖະມົນຕີກະຊວງການເງິນ. ຫຼັງຈາກນັ້ນ, ປະທານກອງປະຊຸມໄດ້ມີຄຳເຫັນເຈາະຈີ້ມ ທັງໃຫ້ທິດຊີ້ນຳໃນການຄົ້ນຄວ້າປະກອບຄຳເຫັນຕໍ່ບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ; ບັນດາທ່ານ ສສຊ ກໍໄດ້ພ້ອມກັນສຸມໃສ່ຄົ້ນຄວ້າ ແລະ ປະກອບຄຳເຫັນໃສ່ບົດລາຍງານຂອງລັດຖະບານ.

ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ IX ຈະດຳເນີນໄປຈົນຮອດວັນທີ 11 ທັນວາ 2024, ຄະນະເລຂາທິການສະພາແຫ່ງຊາດ ໄດ້ຈັດຕັ້ງໜ່ວຍງານເພື່ອຮັບເອົາຄຳຄິດຄຳເຫັນແລະຄຳສະເໜີໂດຍກົງຈາກປະຊາ ຊົນທີ່ຈະສົ່ງໄປຍັງກອງປະຊຸມ ເຊິ່ງສາມາດສົ່ງຕາມວິທີລຸ່ມນີ້:

- ສາຍດ່ວນ ໝາຍເລກ: 156 (ໃນໂມງລັດຖະການ)
- ອີເມວ: nalao.156@gmail.com
- ແອັປພລິເຄຊັນ: Laona

**(ນາງ ອາລິນ ສຸພົມມະປະດິດ)**

## ສູນທອນພິດ...

(ຕໍ່ຈາກໜ້າ 1)

ປະຊຸມສຸດຍອດອາຊຽນ ຄັ້ງທີ 44, 45 ແລະ ກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຄັ້ງທີ 45 ໃຫ້ເປັນຮູບປະທຳ; ພ້ອມກັນນັ້ນ, ຍັງສືບຕໍ່ການຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນແລະການແກ້ໄຂບັນຫາຢາເສບຕິດ ທີ່ມີຄວາມຄືບໜ້າດີຂຶ້ນເລື້ອຍໆ.

ຕະຫຼອດປີ 2024 ສະພາແຫ່ງຊາດ ໄດ້ເອົາໃຈໃສ່ເຄື່ອນໄຫວວຽກງານຕາມພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ, ກົດໝາຍ ແລະ ພັນທະສາກົນ ດ້ວຍຄວາມຮັບຜິດຊອບສູງ ແລະ ມີຜົນສຳເລັດຢ່າງຈົບງາມ ເຖິງວ່າໃນທ່າມກາງສະພາບແວດລ້ອມຂອງພາກພື້ນແລະສາກົນພວມມີການຜັນແປໄປຢ່າງສັບສົນ, ວ່ອງໄວ, ສະຫຼັບຊັບຊ້ອນ, ຄາດຄະເນໄດ້ຍາກ ເຊິ່ງສົ່ງຜົນກະທົບໂດຍກົງຕໍ່ບັນດາປະເທດໃນໂລກລວມທັງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຂອງພວກເຮົາ, ບວກກັບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ທີ່ສົ່ງຜົນກະທົບໂດຍກົງຕໍ່ການພັດທະນາເສດຖະກິດ-ສັງຄົມ, ການດຳລົງຊີວິດຂອງພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າໃນຂອບເຂດທົ່ວປະເທດ. ແຕ່ດ້ວຍຄວາມພະຍາຍາມ, ເອົາໃຈໃສ່ນຳພາ-ຊີ້ນຳ ຂອງຄະນະບໍລິຫານງານສູນກາງພັກ, ການເຮັດວຽກຮ່ວມກັນຢ່າງໃກ້ຊິດໃນການແກ້ໄຂບັນຫາທີ່ເຄັ່ງຮ້ອນຕ່າງໆລະຫວ່າງສະພາແຫ່ງຊາດ ແລະ ລັດຖະບານ ເປັນຕົ້ນ ໄດ້ເຮັດໃຫ້ບັນດາມາດຕະການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໄດ້ຮັບການຈັດຕັ້ງປະຕິບັດຢ່າງຈິງຈັງກວ່າເກົ່າ ເຊິ່ງມີຜົນສຳເລັດດີສົມຄວນ, ເຮັດໃຫ້ເສດຖະກິດຂອງປະເທດສືບຕໍ່ມີການຂະຫຍາຍຕົວໃນທາງບວກ, ບັນດາຄາດໝາຍທາງດ້ານເສດຖະກິດ-ສັງຄົມສາມາດບັນລຸໄດ້ຕາມແຜນ ແລະ ຄາດໝາຍ, ຈຳນວນໜຶ່ງປະຕິບັດໄດ້ລື່ນແຜນ ເຊິ່ງເປັນການປະກອບສ່ວນທີ່ສຳຄັນເຮັດໃຫ້ປະເທດຊາດສືບຕໍ່ມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ເສດຖະກິດຍັງສືບຕໍ່ມີທ່າອຽງເຕີບໂຕ ແລະ ຂະຫຍາຍຕົວຕໍ່ເນື່ອງ, ບົດບາດຂອງປະເທດເຮົາໄດ້ຮັບການຍົກສູງພົ້ນເດັ່ນຂຶ້ນໃນເວທີພາກພື້ນ ແລະ ສາກົນ.

ປະຕິບັດຕາມລັດຖະທຳມະນູນ ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ, ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ຄັ້ງນີ້ ຈະໄດ້ພິຈາລະນາຮັບຮອງບັນຫາສຳຄັນພື້ນຖານຂອງປະເທດຊາດ ດັ່ງນີ້:

1. ບົດລາຍງານຂອງທ່ານນາຍົກລັດຖະມົນຕີ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ ປະຈຳປີ 2024 ແລະ ແຜນການປະຈຳປີ 2025 ຕິດພັນກັບວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ; ແຜນການລົງທຶນຂອງລັດປະຈຳປີ 2025, ແຜນຈັດສັນງົບປະມານໃຫ້ກະຊວງ, ອົງການ ແລະ ທ້ອງຖິ່ນ ປະຈຳປີ 2025, ການດັດແກ້ແຜນງົບປະມານລາຍຮັບ-ລາຍຈ່າຍວິຊາການຂອງຂະແໜງການຂັ້ນສູນກາງ ແລະທ້ອງຖິ່ນຂອງລັດຖະບານ ປີ 2024;

2. ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດຕາມມະຕິສະພາແຫ່ງຊາດ ສະບັບເລກທີ 110/ສພຊ, ລົງວັນທີ 21 ພະຈິກ 2023;

3. ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານສາມສ້າງ ຕາມມະຕິສະພາແຫ່ງຊາດ ສະບັບເລກທີ 02/ສພຊ, ລົງວັນທີ 28 ມັງກອນ 2016 ວ່າດ້ວຍການຈັດຕັ້ງປະຕິບັດວຽກງານສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານແລະສ້າງບ້ານເປັນຫົວໜ່ວຍພັດທະນາ;

4. ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດຍຸດທະສາດການປະຕິຮູບລະບົບການສຶກສາ, ການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ໃນໄລຍະຜ່ານມາ ແລະທິດທາງແຜນການໃນຕໍ່ໜ້າ;

5. ບົດລາຍງານກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດວັດທະນະທຳ-ສັງຄົມ 4 ສະບັບ ຄື: ກົດໝາຍວ່າດ້ວຍການສຶກສາ, ກົດໝາຍວ່າດ້ວຍການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ, ກົດໝາຍວ່າດ້ວຍແຮງງານ ແລະ ກົດໝາຍວ່າດ້ວຍປ້າຍ;

6. ບົດລາຍງານກ່ຽວກັບຮ່າງວິໄສທັດຮອດປີ 2040 ແລະ ແຜນຍຸດທະສາດການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ຮອດປີ 2030;

7. ບົດລາຍງານຂອງອົງການກວດສອບແຫ່ງລັດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2024 ແລະ ແຜນການປະຈຳປີ 2025, ບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳປີ 2023;

8. ບົດລາຍງານຂອງອົງການກວດກາແຫ່ງລັດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ແຜນການປະຈຳປີ 2025, ບົດລາຍງານຜົນການກວດກາຕາມຜົນການກວດສອບ ປີ 2022;

9. ບົດລາຍງານຂອງສານປະຊາຊົນສູງສຸດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ແຜນການປະຈຳປີ 2025;

10. ບົດລາຍງານຂອງອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ແຜນການປະຈຳປີ 2025;

11. ບົດລາຍງານຂອງສະພາແຫ່ງຊາດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2024 ແລະແຜນການປະຈຳປີ 2025;

12. ບົດລາຍງານຂອງຄະນະກຳມະການລະດັບຊາດ ກ່ຽວກັບຄວາມຄືບໜ້າໃນການປັບປຸງລັດຖະທຳມະນູນ ແຫ່ງ ສປປລາວ ສະບັບປີ 2015;

13. ພິຈາລະນາ, ຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍ ຈຳນວນ 9 ສະບັບໃນນີ້, ມີກົດໝາຍສ້າງໃໝ່ 2 ສະບັບຄື: ກົດໝາຍວ່າດ້ວຍທີ່ຢູ່ອາໄສ, ກົດໝາຍວ່າດ້ວຍພັດທະນາສີມືແຮງງານ; ກົດໝາຍປັບປຸງ 7 ສະບັບຄື: ກົດໝາຍວ່າດ້ວຍການກວດສອບອິດສະລະ, ກົດໝາຍວ່າດ້ວຍທະນາຄານ ແຫ່ງ ສປປລາວ, ກົດໝາຍວ່າດ້ວຍການສຶກສາ, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ, ກົດໝາຍວ່າດ້ວຍສະຫະພັນແມ່ຍິງລາວ, ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ.

ນອກນັ້ນ, ກອງປະຊຸມຄັ້ງນີ້ຍັງຈະໄດ້ຮັບຟັງການຊີ້ແຈງຂອງສະມາຊິກລັດຖະບານແລະພາກສ່ວນກ່ຽວຂ້ອງ ຈຳນວນໜຶ່ງ ຕໍ່ຄຳຊັກຖາມຂອງບັນດາທ່ານສະມາຊິກສະພາແຫ່ງຊາດ.

ກອງປະຊຸມສະໄໝສາມັນເທື່ອທີ 8 ຄັ້ງນີ້ ຈະໄດ້ພິຈາລະນາຕົກລົງເນື້ອໃນທີ່ສຳຄັນ. ສະນັ້ນ, ເພື່ອເຮັດໃຫ້ການພິຈາລະນາຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດທີ່ມີຈຳນວນຫຼາຍຄືດັ່ງກ່າວ ໃຫ້ມີຄຸນນະພາບ, ມີປະສິດທິຜົນແລະບັນລຸຜົນຕາມແຜນການທີ່ວາງໄວ້; ໃນນາມປະທານກອງປະຊຸມ, ຂ້າພະເຈົ້າຂໍຮຽກຮ້ອງມາຍັງທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງສືບຕໍ່ໃຫ້ການຮ່ວມມື, ສະໜັບສະໜູນ ແລະ ສະໜອງຂໍ້ມູນຕໍ່ບັນດາເນື້ອໃນທີ່ຈະນຳເຂົ້າພິຈາລະນາແລະຮັບຮອງໃນກອງປະຊຸມຄັ້ງນີ້ແລະຂໍຮຽກຮ້ອງມາຍັງບັນດາທ່ານສະມາຊິກສະພາແຫ່ງຊາດ ຈົ່ງໄດ້ນຳໃຊ້ສິດປະຊາທິປະໄຕ, ເສີມຂະຫຍາຍຫົວຄິດປະດິດສ້າງ ແລະ ເຊີດຊູຄວາມຮັບຜິດຊອບການເມືອງຂອງຕົນ ໃນການສຸມສະຕິປັນຍາເຂົ້າໃນການຄົ້ນຄວ້າເນື້ອໃນຢ່າງເລິກເຊິ່ງ, ປະກອບຄຳເຫັນຕໍ່ທຸກບັນຫາຕ່າງໆຢ່າງຖີ່ຖ້ວນ, ສ້າງສັນ, ຮັດກຸມ, ພາວະວິໄສ, ມີເຫດມີຜົນ, ແທດຕົວຈິງ ບົນພື້ນຖານແນວທາງປ່ຽນແປງໃໝ່ຂອງພັກ, ລັດຖະທຳມະນູນ, ກົດໝາຍຂອງລັດແລະສະພາບຄວາມເປັນຈິງທາງດ້ານເສດຖະກິດ-ສັງຄົມຕາມເງື່ອນໄຂຕົວຈິງຂອງປະເທດເຮົາໃນປັດຈຸບັນ ພ້ອມທັງຊອກຫາວິທີການ, ມາດຕະການແກ້ໄຂທີ່ສອດຄ່ອງຕໍ່ບັນດາບັນຫາຮີບດ່ວນ ແລະ ເຄັ່ງຮ້ອນຂອງສັງຄົມພວກເຮົາໃນປັດຈຸບັນ ເຊິ່ງປະຊາຊົນຍັງມີຄວາມເປັນຫ່ວງ. ພ້ອມກັນນັ້ນ, ສ້າງຄວາມເປັນເອກະພາບສູງຕໍ່ເນື້ອໃນທີ່ນຳມາພິຈາລະນາໃນກອງປະຊຸມຄັ້ງນີ້ ໃຫ້ມີປະສິດທິພາບ, ປະສິດທິຜົນ ສາມາດຮັບຮອງອອກເປັນມະຕິ ແລະ ນຳໄປຈັດຕັ້ງປະຕິບັດຢ່າງເປັນຮູບປະທຳຢ່າງແທ້ຈິງ.

## ຄາດຄະເນ...

(ຕໍ່ຈາກໜ້າ 1)

ສະພາແຫ່ງຊາດ ແລະ ແຜນວຽກຈຸດສຸມຂອງລັດຖະບານໃນປີ 2024 ທີ່ກຳນົດໄວ້ ໂດຍສະເພາະການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ຕາມມະຕິເລກທີ 19/ກມສພ; ໂດຍລວມເຫັນວ່າການພັດທະນາຂະແໜງເສດຖະກິດ ມີທັງໝົດ 11 ຕົວຊີ້ວັດ ໃນນີ້, ມີ 10 ຕົວຊີ້ວັດ ຄາດວ່າຈະບັນລຸຕາມແຜນ ແລະ ມີ 1 ຕົວຊີ້ວັດ ຄາດວ່າຈະບໍ່ສາມາດບັນລຸແຜນ ຄື: ການຜະລິດເຂົ້າເປືອກ ໝົດປີຄາດວ່າຈະປະຕິບັດໄດ້ 3.64 ລ້ານໂຕນ ເທົ່າກັບ 94 % ຂອງແຜນການ (ມະຕິ 3.86 ລ້ານໂຕນ) ສາເຫດຍ້ອນໄດ້ຮັບຄວາມເສຍຫາຍຈາກໄພພິບັດທຳມະຊາດນ້ຳຖ້ວມທີ່ເກີດຂຶ້ນໃນຊ່ວງລະດູຝົນ ເຊິ່ງສັງລວມຫຍໍ້ຕາມຂະແໜງການເສດຖະກິດໄດ້ ດັ່ງນີ້:

**1. ການຂະຫຍາຍຕົວທາງດ້ານເສດຖະກິດ**

- ໃນໄລຍະເກືອບ 1 ປີຜ່ານມາ, GDP ຂະຫຍາຍຕົວສະເລ່ຍໃນລະດັບ 4.6% (ຕົວເລກສະຫຼຸບ 9 ເດືອນ) ເຊິ່ງຄາດຄະເນໝົດປີ ຈະສາມາດບັນລຸໄດ້ຕາມແຜນ (ສະພາແຫ່ງຊາດຮັບຮອງ 4.5%) ປັດໄຈຕົ້ນຕໍທີ່ເຮັດໃຫ້ຕົວເລກຂອງ GDP ເພີ່ມຂຶ້ນ ແມ່ນຂະແໜງບໍລິການ, ການຂົນສົ່ງ ແລະ ການຂາຍຍົກ-ຂາຍຍ່ອຍ ໃນນັ້ນ ເພີ່ມຂຶ້ນຫຼາຍກວ່າໝູ່ ແມ່ນຈາກການເປັນເຈົ້າພາບກອງປະຊຸມສຸດຍອດອາຊຽນ ແລະ ການເປີດປີທ່ອງທ່ຽວລາວ ເຊິ່ງເຮັດໃຫ້ມີນັກທ່ອງທ່ຽວຈາກພາຍໃນ ແລະ ຕ່າງປະເທດ ເດີນທາງທ່ອງທ່ຽວ ສປປລາວ ລວມທັງໝົດຫຼາຍກວ່າ 5 ລ້ານເທື່ອຄົນ ສ້າງລາຍຮັບໝູນວຽນໄດ້ຫຼາຍກວ່າ 1 ພັນລ້ານໂດລາສະຫະລັດ ໂດຍສະເພາະນັກທ່ອງທ່ຽວພາຍໃນ ເຫັນວ່າບັນລຸໄດ້ເກີນແຜນຂອງປີ (127%); ນອກນັ້ນ, ຂະແໜງກະສິກຳ, ຂະແໜງອຸດສາຫະກຳປຸງແຕ່ງ ແລະ ກໍ່ສ້າງ ກໍມີການຂະຫຍາຍຕົວດີສົມຄວນ ອັນພົ້ນເດັ່ນ ແມ່ນການຜະລິດສະບຽງອາຫານ ຮອດປັດຈຸບັນ ສາມາດປະຕິບັດໄດ້ 3,185.10 ຕື້ກີບ ເທົ່າກັບ 74.66% ຂອງແຜນການປີ, ການຜະລິດແຮ່ທາດທັງຮູບແບບປົກກະຕິ ແລະ ທົດລອງ ປະຕິບັດໄດ້ 34 ພັນກວ່າຕື້ກີບ ເທົ່າກັບ 127.52% ຂອງແຜນການປີ.

- ມູນຄ່າການຄ້າຕ່າງປະເທດ ປະຕິບັດໄດ້ 13,798.33 ລ້ານໂດລາ ເທົ່າກັບ 86.19% ຂອງແຜນການປີ (16,010.09 ລ້ານໂດລາ) ໃນນັ້ນ, ມູນຄ່າການສົ່ງອອກປະຕິບັດໄດ້ 7,314.85 ລ້ານໂດລາ ເທົ່າກັບ 83.84% ຂອງແຜນການປີ (8,724.33 ລ້ານໂດລາ), ມູນຄ່າການນຳເຂົ້າ ປະຕິບັດໄດ້ 6,483.48 ລ້ານໂດລາ ເທົ່າກັບ 88.99% ຂອງແຜນການປີ (7,285.76 ລ້ານໂດລາ) ອັນພົ້ນເດັ່ນແມ່ນການສົ່ງອອກຜະລິດຕະພັນກະສິກຳ ປະຕິບັດໄດ້ 1 ພັນກວ່າລ້ານໂດລາ ເທົ່າກັບ 86.94% ຂອງແຜນການປີ.

- ດ້ານການລົງທຶນ ໃນໄລຍະ 9 ເດືອນຜ່ານມາ ປະຕິບັດໄດ້ 69,110.57 ຕື້ກີບ ລື່ນແຜນ 22% ໃນນີ້: ການລົງທຶນຈາກງົບປະມານຂອງລັດ ປະຕິບັດໄດ້ 4,013.41 ຕື້ກີບ ເທົ່າກັບ 80% ຂອງແຜນການ ແລະ ການລົງທຶນຈາກພາກເອກະຊົນພາຍໃນ ແລະ ຕ່າງປະເທດ ປະຕິບັດໄດ້ 2.61 ຕື້ໂດລາ ເທົ່າກັບ 56,132.25 ຕື້ກີບ ຫຼື ເທົ່າກັບ 173% ຂອງແຜນການ.

**2. ການປະຕິບັດແຜນງົບປະມານແຫ່ງລັດ**

- ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຕາມທິດບຸກທະລຸ ແລະ ເປັນເຈົ້າຕົນເອງສູງກວ່າເກົ່າ ໂດຍນຳໃຊ້ຫຼາຍມາດຕະການຄວບຄູ່ກັນໄປເຊັ່ນ: ສຸມໃສ່ປັບປຸງນິຕິກຳທີ່ກ່ຽວຂ້ອງ ເພື່ອອັດຊ່ອງວ່າງການຮົ່ວໄຫຼຂອງງົບປະມານ ແລະ ການຫັນເປັນທັນສະໄໝ ທັງໄດ້ມອບຄວາມຮັບຜິດຊອບໃຫ້ທ້ອງຖິ່ນເປັນເຈົ້າຕົນເອງຫຼາຍຂຶ້ນກວ່າເກົ່າ ເຊິ່ງສາມາດຈັດເກັບລາຍຮັບງົບປະມານໄດ້ 46,174 ຕື້ກີບ ເທົ່າກັບ 92% ຂອງແຜນການປີ (ແຜນການປີ 50,107 ຕື້ກີບ) ສະເພາະທ້ອງຖິ່ນ ປະຕິບັດໄດ້ 126% ຂອງແຜນການປີ ໃນນີ້ ທຸກແຂວງສາມາດປະຕິບັດລາຍຮັບໄດ້ເກີນແຜນ; ຄາດຄະເນໝົດປີ 2024 ລັດຖະບານ ຈະສາມາດຈັດເກັບລາຍຮັບທັງໝົດໄດ້ເກີນແຜນປະມານ 10% ຂອງແຜນການປີ ຕີກເປັນເງິນປະມານ 5 ພັນກວ່າຕື້ກີບ.

ສ່ວນດ້ານລາຍຈ່າຍງົບປະມານ ປະຕິບັດໄດ້ 41,512 ຕື້ກີບ ເທົ່າກັບ 68% ຂອງແຜນການປີ; ລາຍຈ່າຍສ່ວນໃຫຍ່ແມ່ນສຸມໃສ່ລາຍຈ່າຍບຸລິມະສິດຂອງລັດຖະບານ ເປັນຕົ້ນການເບີກຈ່າຍເງິນເດືອນ, ເງິນອຸດໜູນຄ່າຄອງຊີບໃຫ້ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານບຳນານ ແລະ ຜູ້ເສຍອົງຄະ ລວມທັງການປະຕິບັດເງິນອຸດໜູນຕໍ່ຄູອາສາສະໝັກ; ໄດ້ຍົກລະດັບເງິນເດືອນຂັ້ນຕ່ຳຂອງພະນັກງານ-ລັດຖະກອນ ໃນປີ 2024 ໃຫ້ຢູ່ໃນລະດັບ 1,850,000 ກີບ/ຄົນ/ເດືອນ ແລະ ຄາດໝາຍໃນປີ 2025 ຈະພະຍາຍາມປັບເພີ່ມຂຶ້ນໃຫ້ໄດ້ຕ່ຳສຸດຢູ່ໃນລະດັບ 2,200,000 ກີບ/ຄົນ/ເດືອນ. ສຳລັບການປະຕິບັດລາຍຈ່າຍໝົດປີ 2024 ຈະຄຸ້ມຄອງບໍ່ໃຫ້ເກີນເພດານແຜນທີ່ສະພາແຫ່ງຊາດຮັບຮອງ (ຖ້າບໍ່ນັບເງິນເກີນແຜນປີ 2023 ຜ່ານມາ ທີ່ຈະມາປະຕິບັດເພື່ອດັດແກ້ງົບປະມານປີ 2024).




ນອກຈາກລາຍຮັບທີ່ຄາດວ່າຈະເກີນແຜນ 10% ຂອງແຜນການ, ຍັງມີລາຍຮັບວິຊາການ ແລະ ກອງທຶນຈຳນວນໜຶ່ງ ທີ່ຫົວໜ່ວຍງົບປະມານສະເໜີດັດແກ້ຕື່ມ 941,45 ຕື້ກີບ ທີ່ມີຄວາມຈຳເປັນໃນການໃຊ້ຈ່າຍ ເພື່ອປະຕິບັດວຽກງານຈຸດສຸມທ້າຍປີ ທີ່ຈະໄດ້ສະເໜີດັດແກ້ຕາມມາດຕາ 59 ທີ່ກຳນົດໃນກົດໝາຍວ່າດ້ວຍງົບປະມານແຫ່ງລັດ.

- ໄດ້ສືບຕໍ່ແກ້ໄຂໜີ້ສິນພາຍໃນ ແລະ ຕ່າງປະເທດ ດ້ວຍຮູບການຕ່າງໆໃຫ້ໄດ້ຕາມສັນຍາ ໂດຍໄດ້ສຸມໃສ່ຈັດຕັ້ງປະຕິບັດມາດຕະການຕ່າງໆໃນການລະດົມທຶນ ເປັນຕົ້ນແມ່ນການເກັບຄືນເງິນກູ້ຢືມຕໍ່, ການກູ້ຢືມ ແລະ ການອອກພັນທະບັດຜ່ານຕະຫຼາດຫຼັກຊັບລາວ; ນອກຈາກນັ້ນ, ຍັງໄດ້ນຳໃຊ້ລາຍຮັບພາຍໃນຈຳນວນໜຶ່ງ ເພື່ອຊຳລະໜີ້ສິນໃຫ້ຕ່າງປະເທດ ທັນຕາມກຳນົດເວລາ ແລະ ສາມາດຮັບປະກັນບໍ່ໃຫ້ປະເທດເຮົາ ຕົກເປັນປະເທດທີ່ບໍ່ສາມາດຊຳລະໜີ້ສິນໄດ້. ສຳລັບການແກ້ໄຂໜີ້ສິນໂຄງການລົງທຶນຂອງລັດ ດ້ວຍຮູບແບບອວ່າຍໜີ້ 3 ແຈ ບ້ວງ 8 ພັນຕື້ກີບ, ມາຮອດປັດຈຸບັນ ສາມາດປະຕິ ບັດໄດ້ 7,893 ຕື້ກີບ ເທົ່າກັບ 98.67% ຂອງແຜນການ.

- ການປະຕິຮູບລັດວິສາຫະກິດ: ເປັນໜ້າທີ່ການເມືອງຕິດພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ; ປັດຈຸບັນມີວິສາຫະກິດລັດລົງທຶນໃນຂອບເຂດທົ່ວປະເທດທັງໝົດ 171 ຫົວໜ່ວຍ ໃນນີ້, ຂັ້ນສູນກາງຄຸ້ມຄອງ 93 ຫົວໜ່ວຍ ແລະ ຂັ້ນທ້ອງຖິ່ນຄຸ້ມຄອງ 78 ຫົວໜ່ວຍ. ໄດ້ດຳເນີນຂັ້ນຕອນການປະຕິຮູບ 32 ຫົວໜ່ວຍ ໃນນັ້ນ, ສາມາດຈັດຕັ້ງປະຕິບັດສຳເລັດແລ້ວ 10 ຫົວໜ່ວຍ ເຊິ່ງໄດ້ຍຸບເລີກ 2 ຫົວໜ່ວຍຄື: ລັດວິສາຫະກິດຂົນສົ່ງນ້ຳມັນເຊື້ອໄຟລາວ ແລະ ບໍລິສັດ ວິສະວະກຳສ້ອມແປງເຮືອບິນ - LEACO ແລະ ໄດ້ສຳເລັດການກຳນົດແຜນປະຕິຮູບ 3 ຫົວໜ່ວຍຄື: ລັດວິສາຫະກິດໄຟຟ້າລາວ, ລັດວິສາຫະກິດນ້ຳມັນເຊື້ອໄຟລາວ ແລະ ລັດວິສາຫະກິດການບິນລາວ ເຊິ່ງປັດຈຸບັນພວມຊຸ້ມຊ້ຽວປະຕິບັດຕາມແຜນປະຕິຮູບດັ່ງກ່າວ; ນອກຈາກນັ້ນ, ຍັງໄດ້ສ້າງຕັ້ງວິສາຫະກິດລັດລົງທຶນ (ວິສາຫະກິດທີ່ລັດຖືຮຸ້ນ) ຂຶ້ນຕື່ມ 11 ຫົວໜ່ວຍ.

**3. ການຮັກສາສະຖຽນລະພາບດ້ານເງິນຕາ**

ໄດ້ເພີ່ມທະວີການຄວບຄຸມອັດຕາເງິນເຟີ້ ດ້ວຍການປະຕິບັດນະໂຍບາຍເງິນຕາແບບຮັດກຸມຫຼາຍຂຶ້ນ, ດຳເນີນນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດ ເພື່ອບໍ່ໃຫ້ອັດຕາແລກປ່ຽນຜັນຜວນແຮງ, ສືບຕໍ່ຄຸ້ມຄອງເງິນຕາຕ່າງປະເທດໃຫ້ເຂົ້າສູ່ລະບົບທະນາຄານ, ຄົ້ນຄວ້າສ້າງລະບົບຄວບຄຸມລາຄາສິນຄ້າ, ນຳໃຊ້ນະໂຍບາຍທາງດ້ານການຄ້າ ເພື່ອຈຳກັດການນຳເຂົ້າສິນຄ້າຟຸມເຟືອຍ ແລະ ພາຫະນະທາງບົກທີ່ມີມູນຄ່ານັບແຕ່ 50 ພັນໂດລາຂຶ້ນໄປ ຄຽງຄູ່ກັບການເຂັ້ມງວດຕ້ານ ແລະ ສະກັດກັ້ນການຄ້າສິນຄ້ານອກລະບົບ; ຜ່ານການຈັດຕັ້ງປະຕິບັດຕົວຈິງເຫັນວ່າ ອັດຕາເງິນເຟີ້ຫຼຸດລົງຫຼາຍ, ສະເລ່ຍ 10 ເດືອນ ຢູ່ໃນລະດັບ 24.4% ເຊິ່ງໃນທ້າຍປີ 2024 ຄາດວ່າຈະບໍ່ເກີນ 20% (ອັດຕາເງິນເຟີ້ສະເລ່ຍປີ 2023 ແມ່ນ 31.23%) ສາມາດຄວບຄຸມອັດຕາແລກປ່ຽນໃຫ້ມີຄວາມສະຫງົບຫຼາຍຂຶ້ນ ໃນນີ້:

- ສາມາດຄວບຄຸມປະລິມານເງິນ M2 ໂດຍສະເພາະອົງປະກອບປະລິມານເງິນທີ່ເປັນເງິນກີບ ໄດ້ໃນລະດັບແນ່ນອນພໍສົມຄວນ ດ້ວຍການນຳໃຊ້ອັດຕາດອກເບ້ຍອ້າງອີງຂອງທະນາຄານແຫ່ງ ສປປລາວ, ການພິມຈຳໜ່າຍພັນທະບັດ ແລະ ລວມສູນບັນຊີຄັງເງິນຢູ່ທະນາຄານ ແຫ່ງ ສປປລາວ ເພື່ອຄຸ້ມຄອງສະພາບຄ່ອງເງິນຕາໃນລະບົບທະນາຄານ ໃຫ້ຢູ່ໃນລະດັບທີ່ເໝາະສົມ ເຮັດໃຫ້ M2 ຂະຫຍາຍຕົວຫຼຸດລົງມາຢູ່ໃນລະດັບ 22.13% ໃນເດືອນຕຸລາ ແລະ ຄາດວ່າຮອດທ້າຍປີນີ້ ຈະຫຍາຍຕົວບໍ່ເກີນ 25%.

- ໄດ້ປະຕິບັດມາດຕະການຕ່າງໆເພື່ອເພີ່ມຄັງສຳຮອງເງິນຕາຕ່າງປະເທດເຊັ່ນ: ໄດ້ມີມາດຕະການເຂັ້ມງວດຕໍ່ຜູ້ປະກອບການທີ່ສົ່ງອອກ ໃຫ້ນຳລາຍຮັບເປັນເງິນຕາໂອນເຂົ້າມາ ສປປລາວ ແລະ ແລກປ່ຽນກັບທະນາຄານ; ພ້ອມກັນນັ້ນ, ກໍກຳນົດໃຫ້ຫົວໜ່ວຍທຸລະກິດນຳເຂົ້າ-ສົ່ງອອກສິນຄ້າ ແລະ ຜູ້ລົງທຶນ ເປີດບັນຊີສະເພາະ ພ້ອມທັງຊຳລະສະສາງຜ່ານລະບົບທະນາຄານ. ຮອດປັດຈຸບັນ ໄດ້ລົງທະບຽນໃຫ້ບໍລິສັດນຳເຂົ້າ-ສົ່ງອອກ 4,012 ຫົວໜ່ວຍ ໃນນັ້ນ, ມີບໍລິສັດນຳເຂົ້າ 733 ຫົວໜ່ວຍ, ບໍລິສັດສົ່ງອອກ 528 ຫົວໜ່ວຍ, ບໍລິສັດນຳເຂົ້າ-ສົ່ງອອກ 2,523 ຫົວໜ່ວຍ ແລະ ບໍລິການ 228 ຫົວໜ່ວຍ; ໄດ້ພັດທະນາລະບົບຊຳລະຂ້າມແດນ ເພື່ອເກັບລາຍຮັບແຮງງານ-ທ່ອງທ່ຽວ ເຮັດໃຫ້ລາຍຮັບຈາກການສົ່ງອອກຜ່ານລະບົບທະນາຄານເຂົ້າມາປະເທດຫຼາຍຂຶ້ນ ບັນລຸໄດ້ 70.56% ແລະ ເຮັດໃຫ້ສາມາດຮັກສາລະດັບຄັງສຳຮອງເງິນຕາຕ່າງປະເທດກຸ້ມການນຳເຂົ້າໄດ້ ໃນລະດັບ 4.29 ເດືອນ ທຽບໃສ່ຄາດໝາຍຂອງວາລະແຫ່ງຊາດ ແມ່ນປະຕິບັດໄດ້ລື່ນຄາດໝາຍ (ຄາດໝາຍວາລະແຫ່ງຊາດ ບໍ່ໃຫ້ຫຼຸດ 3 ເດືອນ); ອັດຕາສ່ວນໜີ້ບໍ່ເກີດດອກອອກຜົນ (NPLs) ຢູ່ໃນລະດັບ 1.86% ເຊິ່ງຢູ່ໃນລະດັບທີ່ສະພາແຫ່ງຊາດຮັບຮອງ (ບໍ່ໃຫ້ເກີນ 3% ຂອງຍອດສິນເຊື່ອທັງໝົດ); ພ້ອມນີ້, ຍອດເຫຼືອເງິນຝາກຂອງທະນາຄານທຸລະກິດ ປະຕິບັດ 98.60% ຂອງ GDP ເຊິ່ງປະຕິບັດໄດ້ລື່ນຄາດໝາຍທີ່ສະພາແຫ່ງຊາດຮັບຮອງ (ຄາດໝາຍ ແມ່ນໃຫ້ໄດ້ 85% ຂອງ GDP). ສຳລັບຍອດເຫຼືອສິນເຊື່ອຂອງຂະແໜງທະນາຄານ ປັດຈຸບັນປະຕິບັດ 64.18% ຂອງ GDP ຄາດວ່າໝົດປີຈະສາມາດບັນລຸໄດ້ຕາມແຜນທີ່ສະພາແຫ່ງຊາດຮັບຮອງ (65% ຂອງ GDP).

- ໄດ້ນຳໃຊ້ 3 ມາດຕະການຕົ້ນຕໍໃນການຄວບຄຸມອັດຕາແລກປ່ຽນຄື: 1. ປັບປຸງກົນໄກການກຳນົດອັດຕາແລກປ່ຽນໃນແຕ່ລະໄລຍະ; 2. ສ້າງຕັ້ງຕະຫຼາດແລກປ່ຽນເງິນຕາແບບອີເລັກໂທຣນິກ (LFX) ດ້ວຍການຮ່ວມທຶນລະຫວ່າງ ທະນາຄານແຫ່ງ ສປປລາວ ກັບ ທະນາຄານທຸລະກິດ 11 ແຫ່ງ ເພື່ອຮັບໃຊ້ສັງຄົມ ແນໃສ່ການຈຳກັດ ແລະ ຕິຖອຍການແລກປ່ຽນນອກລະບົບທະນາຄານແບບຊະຊາຍ; 3. ໄດ້ເລີ່ມຄົ້ນຄວ້າປັບປຸງກົນໄກ ແລະ ລະບຽບການຄຸ້ມຄອງທະນາຄານຄຳ, ຮ້ານຂາຍຄຳ ແລະ ວັດຖຸມີຄ່າ ກໍຄືບັນດາຫົວໜ່ວຍເສດຖະກິດທີ່ກ່ຽວຂ້ອງເພື່ອປະກອບສ່ວນເຮັດໃຫ້ເສດຖະກິດ-ເງິນຕາ ມີຄວາມເຂັ້ມແຂງ. ຈາກການປະຕິບັດບັນດາມາດຕະການດັ່ງກ່າວມານັ້ນສາມາດເຮັດໃຫ້ການອ່ອນຄ່າຂອງເງິນກີບທຽບໂດລາສະຫະລັດ ສະເລ່ຍ 10 ເດືອນປີ 2024 ຫຼຸດລົງຈາກອັດຕາ 23.46% ໃນປີ 2023 ມາເປັນ 13%; ພ້ອມນີ້ ຍັງເຮັດໃຫ້ສ່ວນຕ່າງອັດຕາແລກປ່ຽນລະຫວ່າງທະນາຄານທຸລະກິດ ແລະ ຕະຫຼາດນອກລະບົບ ທີ່ຂະຫຍາຍກວ້າງອອກຫຼາຍກວ່າ 10% ໃນໄຕມາດ 1-2 ໄດ້ຄ່ອຍໆຫຍັບໃກ້ເຂົ້າມາຢູ່ໃນລະດັບຕ່ຳກວ່າ 3% ນັບແຕ່ເດືອນ 9 ເປັນຕົ້ນມາ.

- ໄດ້ສຸມໃສ່ຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອເພື່ອກະຕຸ້ນເສດຖະກິດ ແລະ ນະໂຍບາຍກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ ໃນນັ້ນ, ການປະຕິບັດນະໂຍບາຍສິນເຊື່ອເພື່ອກະຕຸ້ນເສດຖະກິດ ນັບແຕ່ເລີ່ມຈັດຕັ້ງປະຕິບັດໃນເດືອນ 11/2023 ມາຮອດປັດຈຸບັນ ໄດ້ອະນຸມັດ 44 ຫົວໜ່ວຍ ໃນນີ້, ຂະແໜງກະສິກຳ- ປ່າໄມ້ 15 ຫົວໜ່ວຍ, ຂະແໜງບໍລິການທ່ອງທ່ຽວ ແລະ ການຄ້າ 20 ຫົວໜ່ວຍ, ຂະແໜງອຸດສາຫະກຳ-ປຸງແຕ່ງ ແລະ ຫັດຖະກຳ 9 ຫົວໜ່ວຍ ລວມວົງເງິນກູ້ຢືມທັງໝົດ (ແຫຼ່ງທຶນຂອງທະນາຄານທຸລະກິດ) 4,532.50 ຕື້ກີບ; ສຳລັບການປະຕິບັດນະໂຍບາຍສິນເຊື່ອ

ອ່ານຕໍ່ໜ້າ 5

## ຄາດຄະເນ...

(ຕໍ່ຈາກໜ້າ 4)



ເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ ໄດ້ອະນຸມັດວົງເງິນກູ້ຢືມໃຫ້ 419 ຫົວໜ່ວຍ ຢູ່ 18 ແຂວງທົ່ວປະເທດ ໃນນັ້ນ, ຂະແໜງກະສິກຳ-ປ່າໄມ້ 160 ຫົວໜ່ວຍ, ຂະແໜງອຸດສາຫະກຳປຸງແຕ່ງ 32 ຫົວໜ່ວຍ ແລະ ຂະແໜງບໍລິການ-ທ່ອງທ່ຽວແລະການຄ້າ 227 ຫົວໜ່ວຍ ລວມວົງເງິນກູ້ຢືມທັງໝົດ 756.73 ຕື້ກີບ ເຊິ່ງໄດ້ເບີກຖອນເງິນກູ້ຕົວຈິງແລ້ວ 587.59 ຕື້ກີບ ກວມເອົາ 77.65% ຂອງວົງເງິນທີ່ໄດ້ອະນຸມັດທັງໝົດ.

**4. ການຮັກສາສະຖຽນລະພາບທາງດ້ານລາຄາສິນຄ້າ**

ລາຄາສິນຄ້າໂດຍລວມມີສະຖຽນລະພາບທຽບກັບປີຜ່ານມາ ເນື່ອງຈາກສະຖຽນລະພາບຂອງອັ ດຕາແລກປ່ຽນ ຈຶ່ງເຮັດໃຫ້ຫຼຸດຜ່ອນຄວາມຜັນຜວນຂອງລາຄາສິນຄ້າໂດຍທົ່ວໄປໃນຕະຫຼາດ; ລາຄາສິນຄ້າໂດຍລວມໃນທ້ອງຕະຫຼາດ ແມ່ນມີການເໜັງຕີງ ແລະ ປັບຂຶ້ນຕາມການເໜັງຕີງຂອງອັດຕາແລກປ່ຽນ ໂດຍສະເພາະສິນຄ້າອຸປະໂພກ-ບໍລິໂພກ ທີ່ນຳເຂົ້າຈາກຕ່າງປະເທດ ອັນເປັນຜົນເຮັດໃຫ້ອັດຕາເງິນເຟີ້ເພີ່ມຂຶ້ນ, ແຕ່ຍັງຢູ່ໃນລະດັບທີ່ຍັງສາມາດຄວບຄຸມໄດ້. ສຳລັບລາຄາສິນຄ້ານ້ຳມັນເຊື້ອໄຟ ກໍມີທ່າອ່ຽງດີຂຶ້ນ ເນື່ອງຈາກໄດ້ຮັບຜົນກະທົບໃນທາງບວກຈາກການແຂງຄ່າຂຶ້ນຂອງເງິນກີບ ສົມທົບໃສ່ລາຄານ້ຳມັນໃນຕະຫຼາດໂລກ ທີ່ມີທ່າອ່ຽງຫຼຸດລົງ.

**5. ການຜະລິດກະສິກຳເປັນສິນຄ້າ**

- ໄດ້ຫັນເອົາແຜນວຽກຈຸດສຸມທີ 1 ຂອງວາລະແຫ່ງຊາດ ກ່ຽວກັບການຜະລິດເພື່ອທົດແທນການນຳເຂົ້າ ແລະ ຜະລິດເປັນສິນຄ້າສົ່ງອອກມາເປັນແຜນວຽກຈຸດສຸມຂອງລັດຖະບານ ຕິດພັນກັບແຜນວຽກງານຈຸດສຸມຂອງຄະນະສະເພາະກິດ 19/ກມສພ ໃນນີ້, ໄດ້ແຕ່ງຕັ້ງຄະນະ 116/ນຍ ເພື່ອລົງເລິກຮັບຜິດຊອບຊຸກຍູ້ຕິດຕາມ, ກວດກາວຽກງານດັ່ງກ່າວ ຕິດພັນກັບການຜັນຂະຫຍາຍມະຕິ04/ກມສພວ່າດ້ວຍການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງໃນໄລຍະໃໝ່ (ສອຈ) ເຊິ່ງຄະນະດັ່ງກ່າວ ໄດ້ລົງສົມທົບກັບຂະແໜງການກ່ຽວຂ້ອງຂອງນະຄອນຫຼວງວຽງຈັນ ແລະບັນດາແຂວງ ເພື່ອເຜີຍແຜ່ທິດຊີ້ນຳຂອງລັດຖະບານ ແລະ ນິຕິກຳຕ່າງໆ ເພື່ອເນັ້ນໜັກໃຫ້ເຂົ້າໃຈຈະແຈ້ງຕື່ມ ແລະ ໄດ້ລົງຊຸກຍູ້ຕິດຕາມການຈັດຕັ້ງປະຕິບັດຕົວຈິງ ຕິດພັນກັບການຊຸກຍູ້ການຜະລິດໃນຂະແໜງການຕ່າງໆຢູ່ບັນດາທ້ອງຖິ່ນໃນທົ່ວປະເທດ; ນອກຈາກນັ້ນ, ຍັງໄດ້ສຸມໃສ່ການຜະລິດເພື່ອຄ້ຳປະກັນສະບຽງອາຫານ ສາມາດປະຕິບັດໄດ້ 2.46 ລ້ານໂຕນ. ພ້ອມກັນນັ້ນ, ກໍໄດ້ເອົາໃຈ ໃສ່ປະຕິບັດຄຳສັ່ງ 11/ນຍ ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້, ທີ່ດິນປ່າໄມ້, ຕ້ານ ແລະ ສະກັດກັ້ນການບຸກລຸກທຳລາຍປ່າໄມ້, ທີ່ດິນປ່າໄມ້ ແລະ ໄຟໄໝ້ລາມປ່າ ເຮັດໃຫ້ປ່າ ໄມ້ຖືກທຳລາຍໜ້ອຍລົງ ແລະ ໝອກຄວັນ (PM 2.5) ກໍຫຼຸດລົງ 50% ທຽບໃສ່ປີ 2023.

- ຄຽງຄູ່ກັບການສົ່ງເສີມການຜະລິດເປັນສິນຄ້າ, ກໍໄດ້ມີການໂຄສະນາປະຊາສຳພັນຜະລິດຕະພັນລາວຢ່າງກວ້າງຂວາງເຊັ່ນ: ການອອກຂ່າວຜ່ານສື່ຕ່າງໆ, ຈັດງານວາງສະແດງສິນຄ້າພາຍໃນຢ່າງປົກກະຕິ, ລະດົມທຸລະກິດເຂົ້າຮ່ວມງານສະແດງ ແລະ ໂຄສະນາສິນຄ້າ ທັງພາຍໃນ ແລະ ຕ່າງປະເທດ; ພ້ອມນັ້ນ, ກໍໄດ້ເຈລະຈາກັບບັນດາຮ້ານຄ້າທັນສະໄໝ ໃນການນຳເອົາສິນຄ້າລາວເຂົ້າໄປວາງຈຳໜ່າຍ.

**6. ການຄຸ້ມຄອງໂຄງການບໍ່ແຮ່**

ຮອດປັດຈຸບັນ ຂັ້ນສູນກາງ ແລະ ທ້ອງຖິ່ນ ໄດ້ອະນຸມັດໂຄງການຊອກຄົ້ນ, ສຳຫຼວດ, ຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດທັງໝົດ 1,007 ບໍລິສັດ, 1,205 ກິດຈະການ (ໃນນີ້ ໂຄງການຂຸດຄົ້ນ ແລະ ປຸງແຕ່ງແບບທົດລອງ 93 ບໍລິສັດ: ແຮ່ເຫຼັກ 37 ບໍລິສັດ, ຫີນມາໂບ 2 ບໍລິສັດ, ແຮ່ຄຳ 10 ບໍລິສັດ, ແຮ່ຄຳຕົກຂ້ອນ 31 ບໍລິສັດ ແລະ ແຮ່ຫາຍາກ 13 ບໍລິສັດ); ຈາກການປະເມີນບັນດາໂຄງການແຮ່ທາດສົກປີ 2023 ຈຶ່ງໄດ້ໂຈະການພິຈາລະນາໂຄງການໃໝ່ສຳລັບແຮ່ທາດ (ປະເພດ ຄຳຕົກຂ້ອນ, ແຮ່ຫາຍາກ ແລະ ໂລຫະທາດຈຳນວນໜຶ່ງ) ຕາມການຊີ້ນຳຂອງກົມການເມືອງສູນກາງພັກ ແລະສະພາແຫ່ງຊາດ ເພື່ອສຸມໃສ່ດຳເນີນການປະເມີນ, ກວດກາແລະດັດສົມບັນດາໂຄງການທີ່ໄດ້ອະນຸມັດຜ່ານມາ ໂຄງການໃດທີ່ມີຜົນການປະເມີນປະເພດ C+ ແລະ C ລັດຖະບານໄດ້ດຳເນີນການຍົກເລີກແລະຖອນໂຄງການຄືນເປັນແຕ່ລະກໍລະນີໄປ. ພ້ອມນີ້, ກໍໄດ້ໂຈະຖາວອນການອະນຸມັດໂຄງການທົດລອງທາງດ້ານແຮ່ທາດ ແລະ ສືບຕໍ່ຫັນບັນດາໂຄງການທົດລອງທີ່ໄດ້ອະນຸມັດຜ່ານມາ ເຂົ້າສູ່ກົນໄກປົກກະຕິຕາມກົດໝາຍກ່ຽວຂ້ອງ; ພ້ອມກັນນັ້ນ, ກໍໄດ້ສຸມໃສ່ກວດກາໂຄງການແຮ່ຄຳ ແລະ ປະຕິບັດມາດຕະການຕໍ່ໂຄງການທີ່ລະເມີດສັນຍາ, ການລາຍງານຂໍ້ມູນຜົນການຜະລິດບໍ່ຖືກກັບຄວາມເປັນຈິງ ໂດຍຈະມີມາດຕະການຄຸ້ມຄອງ ແລະ ກວດກາຢ່າງເຂັ້ມງວດກວ່າເກົ່າ.

**7. ການແກ້ໄຂບັນຫາຍານພາຫະນະທີ່ນຳເຂົ້າບໍ່ຖືກຕ້ອງ ແລະ ນຳໃຊ້ບໍ່ຖືກເປົ້າໝາຍ**

ໄດ້ສຸມໃສ່ກວດກາພາຫະນະປະເພດລົດໃຫຍ່ທີ່ນຳເຂົ້າບໍ່ຖືກຕ້ອງທີ່ນຳໃຊ້ຢູ່ພາຍໃນປະເທດ, ຜ່ານການກວດກາສາມາດພົບເຫັນພາຫະນະຢູ່ 5 ແຂວງພາກເໜືອ 5,889 ຄັນ ເຊິ່ງລັດຖະບານໄດ້ແຕ່ງຕັ້ງຄະນະສະເພາະກິດຂັ້ນສູນກາງ (ຄະນະ 116/ນຍ) ລົງສົມທົບກັບບັນດາອົງການປົກຄອງທ້ອງຖິ່ນ ເພື່ອດຳເນີນການກວດກາ, ແກ້ໄຂຕາມກົດໝາຍ ແລະ ລະ ບຽບການທີ່ກ່ຽວຂ້ອງຢ່າງເຂັ້ມງວດ ໂດຍຈະສຸມໃສ່ແກ້ໄຂບັນຫາດັ່ງກ່າວໃຫ້ສຳເລັດພາຍໃນປີນີ້ ເຊິ່ງຄາດຄະເນວ່າຈະສາມາດເກັບລາຍຮັບໄດ້ຈຳນວນບໍ່ໜ້ອຍ.

**8. ການປັບປຸງແລະຍົກລະດັບໂຄງລ່າງພື້ນຖານຄົມມະນາຄົມ ແລະ ຂົນສົ່ງ**

ໄດ້ສຸມໃສ່ຕິດຕາມ, ກວດກາການປັບປຸງ ແລະ ກໍ່ສ້າງໂຄງລ່າງພື້ນຖານຕາມແລວທາງເຊື່ອມໂຍງ-ເຊື່ອມຈອດກັບປະເທດໃກ້ຄຽງ ເຊັ່ນ: ໂຄງການທາງດ່ວນວຽງຈັນ-ຮ່າໂນ້ຍ, ທາງດ່ວນວຽງຈັນ-ບໍ່ເຕັນ ຊ່ວງທີ່ຍັງບໍ່ທັນສຳເລັດ, ທາງດ່ວນບໍ່ເຕັນ-ຫ້ວຍຊາຍແລະທາງດ່ວນ (ເອກະຊົນ) ແລະ ຍົກລະດັບເສັ້ນທາງທ່າແຂກ-ຊາຍແດນຫວຽດນາມ (ນາເຜົ້າ-ຈໍ່ຫຼໍ່) ພາຍໃຕ້ທຶນນີດາ (NEDA), ການກໍ່ສ້າງຂົວມິດຕະພາບ 5 (ປາກຊັນ-ບຶງການ) ພ້ອມທັງໄດ້ສຸມໃສ່ບູລະນະ ແລະ ສ້ອມແປງບັນດາເສັ້ນທາງທີ່ເປ່ເພ ເປັນຕົ້ນເສັ້ນທາງເລກທີ 13 ໃຕ້, ເສັ້ນທາງເລກທີ 12 ແລະ ເສັ້ນທາງເຂົ້າຫາແຫຼ່ງທ່ອງທ່ຽວຈຳນວນໜຶ່ງ ໃຫ້ມີຄວາມສະດວກກວ່າເກົ່າ; ໄດ້ເອົາໃຈໃສ່ຕິດຕາມ, ຄຸ້ມຄອງ 3 ທ່າບົກທີ່ເປີດນຳໃຊ້ແລ້ວຄື: ທ່າບົກສະຫວັນນະເຂດ, ທ່າບົກຈຳປາສັກ ແລະ ທ່າບົກທ່ານາແລ້ງ ຕິດພັນກັບການປັບປຸງຍົກລະດັບການຄຸ້ມຄອງແລະບໍລິການຢູ່ດ່ານ ສາກົນຂົວມິດຕະພາບ-1, ການເຊື່ອມການຂົນສົ່ງລະຫວ່າງ ລາງ ສູ່ ລາງ (ລາວ-ຈີນ ກັບ ລາວ-ໄທ) ຢູ່ນະຄອນຫຼວງວຽງຈັນ ລວມທັງການບໍລິການ ແລະ ຮັກສາຄວາມປອດໄພຕາມເສັ້ນທາງລົດໄຟລາວ-ຈີນ ໃຫ້ດຳເນີນຢ່າງມີປະສິດທິຜົນ. ໂດຍລວມເຫັນວ່າດ້ານໂຍທາທິການມີ 3 ຕົວຊີ້ວັດ ຄາດວ່າຈະບັນລຸໄດ້ຕາມແຜນທັງໝົດທີ່ກຳນົດໄວ້.

**ສຳລັບວຽກງານຈຸດສຸມດ້ານເສດຖະກິດປີ 2025 ລັດຖະບານຈະສຸມໃສ່ດັ່ງນີ້:**

1. ສຸມໃສ່ແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໂດຍສະເພາະບັນຫາເງິນເຟີ້, ອັດຕາແລກປ່ຽນ, ລາຄາສິນຄ້າ ແລະ ໜີ້ສິນຕ່າງປະເທດດ້ວຍການບັງຄັບໃຊ້ບັນດາມາດຕະການທີ່ໄດ້ວາງອອກແລ້ວນັ້ນ ໃຫ້ປາກົດຜົນເປັນຈິງ ແລະເປັນຮູບປະທຳຫຼາຍຂຶ້ນກວ່າເກົ່າ ໂດຍມອບວຽກເປັນລາຍບຸກຄົນ ແລະ ກຳນົດຄາດໝາຍເວລາສຳເລັດ ແລະ ເວລາລາຍງານຄືນໃຫ້ລະອຽດ.

2. ສືບຕໍ່ຍູ້ແຮງເສດຖະກິດໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງ (GDPຂະຫຍາຍຕົວຢູ່ໃນລະດັບ 4.8%) ດ້ວຍການຊຸກຍູ້ສົ່ງເສີມການຜະລິດເພື່ອທົດແທນການນຳເຂົ້າ ແລະເປັນສິນຄ້າສົ່ງອອກ, ຊຸກຍູ້ການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ເຂົ້າສູ່ລວງເລິກ ເຊັ່ນ: ຜະລິດປຸ໋ຍຊີວະພາບ, ຫົວອາຫານລ້ຽງສັດ, ວັດສະດຸກໍ່ສ້າງ, ເຄື່ອງອຸປະໂພກ-ບໍລິໂພກ ໄປຄຽງຄູ່ກັບການປັບປຸງໂຄງລ່າງພື້ນຖານ ແລະລະບົບການບໍລິການຂົນສົ່ງໃຫ້ມີຄວາມສະດວກ, ວ່ອງໄວ ເພື່ອສົ່ງເສີມການລົງທຶນ, ການຄ້າ ແລະ ການທ່ອງທ່ຽວ.

3. ສຸມໃສ່ຮັກສາສະຖຽນລະພາບທາງດ້ານເງິນຕາໃຫ້ມີຄວາມໝັ້ນທ່ຽງ ດ້ວຍການດຳເນີນນະໂຍບາຍເງິນຕາແບບຮັດກຸມ ແລະ ນະໂຍບາຍອັດຕາແລກປ່ຽນຢ່າງມີປະສິດທິພາບ, ຄຸ້ມຄອງເງິນຕາຕ່າງປະເທດຈາກການລົງທຶນ, ການສົ່ງອອກ-ນຳເຂົ້າສິນຄ້າຜ່ານລະບົບທະນາຄານໃຫ້ຫຼາຍຂຶ້ນ ຕິດພັນກັບສົ່ງເສີມການນຳໃຊ້ເງິນກີບ ແລະ ການນຳໃຊ້ສະກຸນເງິນທ້ອງຖິ່ນກັບປະເທດໃກ້ຄຽງ ເພື່ອຫຼຸດຜ່ອນຄວາມຕ້ອງການເງິນຕາຕ່າງປະເທດ, ສືບຕໍ່ປ່ອຍສິນເຊື່ອເພື່ອກະຕຸ້ນເສດຖະກິດ ແລະ ກະຈາຍແຫຼ່ງທຶນສູ່ທ້ອງຖິ່ນໃຫ້ມີປະສິດທິຜົນສູງ.

4. ສຸມໃສ່ການຂຸດຄົ້ນແຫຼ່ງລາຍຮັບງົບປະມານແຫ່ງລັດໃຫ້ໄດ້ຕາມແຜນ ຫຼື ເກີນແຜນເປັນປີທີ 5 ຕິດຕໍ່ກັນ ແລະ ສູ້ຊົນໃຫ້ເປັນປີທຳອິດໃຫ້ມີລາຍຮັບເກີນດຸນຕາມຄາດໝາຍ ສອຈ ວາງອອກ ໂດຍລັດຖະບານຈະສຸມທຸກກຳລັງແຮງເຂົ້າໃນການເກັບລາຍຮັບຕາມກົດໝາຍ ແລະ ລະບຽບການທີ່ໄດ້ກຳນົດໄວ້, ເລັ່ງການຫັນເປັນທັນສະໄໝ ແລະ ຂະຫຍາຍຖານລາຍຮັບໃໝ່, ຈຳກັດການຍົກເວັ້ນພັນທະຕ່າງໆທີ່ບໍ່ເປັນການກະຕຸ້ນ ຫຼື ສົ່ງເສີມການລົງທຶນ; ລາຍຈ່າຍງົບປະມານແມ່ນໃຫ້ສຸມໃສ່ວຽກງານບຸລິມະສິດຂອງລັດຖະບານ ບົນຈິດໃຈປະຢັດມັດທະຍັດ, ນຳໃຊ້ແຫຼ່ງລາຍຮັບພາຍໃນ ເພື່ອແກ້ໄຂໜີ້ສິນພາຍໃນ ແລະ ຕ່າງປະເທດ ພ້ອມທັງຫຼຸດຜ່ອນການກູ້ຢືມລົງຢ່າງຕັ້ງໜ້າ.

5. ສຳລັບແຜນການລົງທຶນຂອງລັດປະຈຳປີ 2025, ແຜນຈັດສັນງົບປະມານໃຫ້ກະຊວງ-ອົງການແລະທ້ອງຖິ່ນປະຈຳປີ 2025 ມີທຶນ 6,250 ຕື້ກີບ ເພີ່ມຂຶ້ນປະມານ 25% ທຽບໃສ່ແຜນປະຈຳປີ 2024 (ປີ 2024 ມີ 5 ພັນຕື້ກີບ), ໃນນີ້: ບ້ວງລົງທຶນປົກກະຕິ 5,450 ຕື້ກີບ, ບ້ວງປະກອບທຶນ ແລະ ໜີ້ສ່ວນຫຼຸດ 800 ຕື້ກີບ ໄດ້ຈັດສັນໃຫ້ 2 ກຸ່ມແຜນງານໃຫຍ່ຄື: ກຸ່ມທີ 1 ຈັດສັນໃຫ້ບັນດາແຜນງານ/ໂຄງການບຸລິມະສິດຂອງລັດຖະບານ (9 ເປົ້າໝາຍບຸລິມະສິດ) ແລະ ກຸ່ມທີ 2 ຈັດສັນໃຫ້ບັນດາໂຄງການປົກກະຕິ ແລະ ໂຄງການເປົ້າໝາຍສະເພາະຂອງບັນດາກະຊວງ-ອົງການ ແລະ ທ້ອງຖິ່ນຕ່າງໆ ເຊິ່ງກອງປະຊຸມກົມການເມືອງຮ່ວມກັບຄະນະເລຂາທິການສູນກາງພັກ ເຫັນດີຮັບຮອງທາງດ້ານຫຼັກການ.

6. ສືບຕໍ່ດັດສົມຈຳນວນບໍລິສັດນຳເຂົ້າ-ສົ່ງອອກ, ຈຳກັດການນຳເຂົ້າສິນຄ້າທີ່ສາມາດຜະລິດເອງໄດ້ ແລະ ຕັດຖອຍການຄ້ານອກລະບົບ ຫັນໄປສູ່ການຂາຍຍົກ-ຂາຍຍ່ອຍ ເພື່ອຄຸ້ມຄອງການນຳເຂົ້າສິນຄ້າໃຫ້ຫຼຸດໜ້ອຍຖອຍລົງ.

7. ສືບຕໍ່ປັບປຸງກົນໄກ, ລະບຽບການສົ່ງເສີມການລົງທຶນ ແລະ ການດຳເນີນທຸລະກິດ ໃຫ້ມີຄວາມສະດວກ, ວ່ອງໄວເພື່ອດຶງດູດການລົງທຶນພາຍໃນແລະຕ່າງປະເທດໃຫ້ຫຼາຍຂຶ້ນ; ສຸມໃສ່ຕິດຕາມກວດກາບັນດາໂຄງການລົງທຶນທີ່ໄດ້ຮັບອະນຸມັດຜ່ານມາ, ໂຄງການໃດທີ່ບໍ່ມີຄວາມຄືບໜ້າ ຫຼື ມີຄວາມຄືບໜ້າຊ້າ ກໍໃຫ້ເຊີນບໍລິສັດມາແຈ້ງເຕືອນ ແລະ ເຮັດບົດບັນທຶກໄວ້ ພ້ອມທັງກຳນົດເວລາໃຫ້ບໍລິສັດໄປແກ້ໄຂ, ຖ້າແກ້ໄຂບໍ່ໄດ້ແມ່ນຈະໄດ້ກ້າວໄປສູ່ການຍົກເລີກ ຫຼື ແຈ້ງສິ້ນສຸດສັນຍາ ໂດຍສະເພາະໂຄງການກໍ່ສ້າງທາງດ່ວນ ແລະ ໂຄງການບໍ່ແຮ່.

8. ເລັ່ງຫັນໂຄງການທົດລອງແຮ່ທາດ ໄປສູ່ກົນໄກປົກກະຕິຕາມກົດໝາຍກຳນົດ; ພ້ອມກັນນັ້ນ, ຈະໄດ້ສຸມໃສ່ມາດຕະການຄຸ້ມຄອງການຂຸດຄົ້ນ ແລະ ປຸງແຕ່ງແຮ່ຄຳ, ແຮ່ຫາຍາກ ແລະ ອື່ນໆ ທັງຈະໄດ້ຮີບຮ້ອນຄົ້ນຄວ້ານະໂຍບາຍຕົວຈິງຈຳນວນໜຶ່ງ ເພື່ອໃຫ້ມີການສ້າງໂຮງງານປຸງແຕ່ງແຮ່ສຳເລັດຮູບຢູ່ລາວ.

9. ສຸມໃສ່ຍູ້ແຮງການສົ່ງເສີມການຜະລິດກະສິກຳ ເພື່ອຄ້ຳປະກັນສະບຽງອາຫານ, ທົດແທນການນຳເຂົ້າ ແລະເປັນສິນຄ້າສົ່ງອອກໃຫ້ຫຼາຍ; ສືບຕໍ່ສົ່ງເສີມຈຸລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ໃຫ້ແຂງແຮງກວ່າເກົ່າແລະສືບຕໍ່ປະຕິບັດປະຕິຮູບລັດວິສາຫະກິດໃຫຍ່ ໃຫ້ສຳເລັດຕາມແຜນການທີ່ວາງໄວ້.

# ອົງການນິຕິບັນຍັດຂັ້ນທ້ອງຖິ່ນ ສປປລາວ-ສ.ເກົາຫຼີ ເພີ່ມທະວີສາຍພົວພັນຮ່ວມມື



(ສປນວ) - ວັນທີ 01 ພະຈິກ 2024 ທີ່ຫ້ອງວ່າການປົກຄອງນະຄອນຫຼວງວຽງຈັນ (ນວ) ທ່ານ ນາງ ລຳພອຍ ສີອັກຄະຈັນ ຮອງປະທານສະພາປະຊາຊົນນະຄອນຫຼວງວຽງຈັນ (ສປນວ) ໄດ້ຕ້ອນຮັບຄະນະຜູ້ແທນສະພາປະຊາຊົນແຂວງປົກຄອງພິເສດ ເຈຈູ ແຫ່ງ ສາທາລະນະລັດເກົາຫຼີ ນຳໂດຍທ່ານ ຢອງຊິກ ຍັງປະທານຄະນະກຳມະການ ເສດຖະກິດການກະເສດ, ການລ້ຽງສັດ ແລະ ການປະມົງ ພ້ອມດ້ວຍຄະນະ ທີ່ເດີນທາງມາພົບປະຢ້ຽມຢາມ ສປນວ; ເຂົ້າຮ່ວມຕ້ອນຮັບມີບັນດາທ່ານຄະນະປະຈຳ ແລະຄະນະເລຂາທິການ ສປນວ, ພະແນກການຕ່າງປະເທດ ນວ ພ້ອມດ້ວຍພະນັກງານທີ່ກ່ຽວຂ້ອງຈຳນວນໜຶ່ງ.

ທ່ານ ນາງ ລຳພອຍ ສີອັກຄະຈັນ ໄດ້ສະແດງຄວາມຍິນດີຕ້ອນຮັບ ພ້ອມທັງຕີລາຄາສູງຕໍ່ການເດີນທາງມາຢ້ຽມຢາມຄັ້ງນີ້ ເປັນການເສີມຂະຫຍາຍສາຍພົວພັນຮ່ວມມືກັນ ເຊິ່ງຄະນະຜູ້ແທນທັງສອງຝ່າຍໄດ້ມີການຢື້ຢາມຖາມຂ່າວແລະແລກປ່ຽນຂໍ້ມູນນຳກັນ; ພ້ອມດຽວກັນນີ້, ທ່ານ ນາງ ລຳພອຍ ສີອັກຄະຈັນ ກໍໄດ້ສະເໜີໃຫ້ທັງສອງສະພາປະຊາຊົນ ສືບຕໍ່ປະສານສົມທົບກັນ ໂດຍສະເພາະເນື້ອໃນຮ່າງບົດບັນທຶກການຮ່ວມມືລະຫວ່າງສະພາປະຊາຊົນນະຄອນຫຼວງວຽງຈັນ ແລະ ສະພາປະຊາຊົນແຂວງປົກຄອງພິເສດ ເຈຈູ ເພື່ອຄວາມເປັນເອກະພາບດ້ານເນື້ອໃນການຮ່ວມມືຂອງສອງຝ່າຍ ແລະ ກ້າວໄປເຖິງການລົງນາມຮ່ວມກັນໃນຕໍ່ໜ້າ, ເຮັດໃຫ້ວຽກງານຂອງສອງສະພາປະຊາຊົນ ໃນຖານະທີ່ເປັນອົງການນິຕິບັນຍັດຂັ້ນທ້ອງຖິ່ນໃຫ້ແໜ້ນແຟ້ນຍິ່ງຂຶ້ນ ແລະ ລົງເລິກຫຼາຍກວ່າເກົ່າ.

ທ່ານ ຢອງຊິກ ຍັງໄດ້ສະແດງຄວາມຂອບໃຈຕໍ່ທ່ານ ນາງລຳພອຍສີອັກຄະຈັນພ້ອມດ້ວຍຄະນະທີ່ໄດ້ໃຫ້ການຕ້ອນຮັບຢ່າງອົບອຸ່ນ ແລະ ເຫັນດີເປັນເອກະພາບໃນການສືບຕໍ່ປະສານສົມທົບກັນຄົ້ນຄວ້າຮ່າງບົດບັນທຶກການຮ່ວມມືເພື່ອຈະລົງນາມຮ່ວມກັນໃນໄວໆນີ້ ແລະ ສອງສະພາປະຊາຊົນ ຈະໄດ້ລົງເລິກພົວພັນຮ່ວມມືກັນໃນຂົງເຂດວຽກງານຂອງຕົນໃຫ້ສະໜິດແໜ້ນຫຼາຍຂຶ້ນ.

**(ນາງ ຂັນເງິນ ອຳພອນພົງ)**

# ທາລືເນື້ອໃນກອງປະຊຸມ ສພຂ ແລະ ເຊັນບົດບັນທຶກຮ່ວມກັບອົງການປົກຄອງແຂວງ



(ສພຂ) - ຕອນເຊົ້າວັນທີ 06 ພະຈິກ 2024 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຫຼວງນ້ຳທາ ໄດ້ເປີດກອງປະຊຸມປຶກສາຫາລືເນື້ອໃນທີ່ຈະນຳເຂົ້າກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຂ ຊຸດທີ II ແລະ ພິທີເຊັນບົດບັນທຶກຮ່ວມລະຫວ່າງ ສພຂ ກັບ ອົງການປົກຄອງແຂວງຫຼວງນ້ຳທາ ໂດຍການເປັນປະທານຂອງທ່ານ ຄຳຟອງອິນມານີຮອງເລຂາພັກແຂວງ, ປະທານ ສພຂ; ມີທ່ານ ອ່ອນຈັນ ຄຳພາວົງ ຮອງເຈົ້າແຂວງ, ບັນດາທ່ານສະມາຊິກສະພາປະຊາຊົນແຂວງ (ສສຂ), ຫົວໜ້າ ແລະ ຮອງຫົວໜ້າພະແນກການທີ່ກ່ຽວຂ້ອງ, ສານປະຊາຊົນແຂວງ, ອົງການໄອຍະການປະຊາຊົນແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ ພ້ອມດ້ວຍພະນັກງານທີ່ກ່ຽວຂ້ອງ ເຂົ້າຮ່ວມ 35 ທ່ານ, ຍິງ 7 ທ່ານ.

ກອງປະຊຸມໄດ້ຈັດພິທີເຊັນບົດບັນທຶກຮ່ວມລະຫວ່າງສະພາປະຊາຊົນ ກັບ ອົງການປົກຄອງແຂວງ ຢ່າງເປັນທາງການ ເຊິ່ງນັບແຕ່ມີການເລືອກຕັ້ງສະພາປະຊາຊົນຂັ້ນແຂວງຊຸດທີ I ໃນປີ 2016, ສພຂ ຫຼວງນ້ຳທາ ກໍໄດ້ເອົາໃຈ ໃສ່ເຄື່ອນໄຫວ ແລະ ປະຕິບັດໜ້າທີ່ການເປັນຕົວແທນແຫ່ງສິດ, ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າໃນຂອບເຂດທົ່ວແຂວງ ໂດຍປະຕິບັດສາມພາລະບົດບາດຕົ້ນຕໍຄື: ດ້ານນິຕິກຳ, ການຕົກລົງບັນຫາສຳຄັນພື້ນຖານຂອງແຂວງ ແລະ ການຕິດຕາມກວດກາ; ຜ່ານການຈັດຕັ້ງປະຕິບັດເນື້ອໃນບົດບັນທຶກໄລຍະເວລາ 7 ປີ, ປັດຈຸບັນເຫັນວ່າມີບາງເນື້ອໃນບາງມາດຕາບໍ່ສອດຄ່ອງກັບສະພາບການຕົວຈິງ ເນື່ອງຈາກກົດໝາຍມີການປັບປຸງ, ສະພາບໃນໄລຍະໃໝ່ມີການປ່ຽນແປງ ເຊິ່ງມີຄວາມຈຳເປັນຕ້ອງໄດ້ປັບປຸງບາງເນື້ອໃນໃຫ້ຖືກຕ້ອງ, ສອດຄ່ອງກັບກົດໝາຍ ແລະສະພາບການໃນປັດຈຸບັນ, ຈຶ່ງໄດ້ປັບປຸງ ແລະ ລົງນາມຄືນ ເພື່ອເຮັດໃຫ້ພາລະບົດບາດ, ສິດ, ໜ້າທີ່ ແລະ ການເຄື່ອນໄຫວວຽກງານຮ່ວມກັນຂອງສອງອົງການ ມີຄຸນນະພາບ ແລະ ໄດ້ຮັບປະສິດທິຜົນດີຂຶ້ນ.

ໃນວາລະທີ 2 ໄດ້ມີການປຶກສາຫາລື ແລະ ເອກະພາບຕໍ່ບັນດາເນື້ອໃນທີ່ຈະນຳເຂົ້າກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຂ ຫຼວງນ້ຳທາ ຊຸດທີ II ເປັນຕົ້ນ: ວຽກງານຂອງອົງການປົກຄອງແຂວງ, ວຽກງານຂອງອົງການກວດກາລັດ ແລະ ກວດສອບແຫ່ງລັດ; ວຽກງານຂອງອົງການໄອຍະການປະຊາຊົນແຂວງ ແລະ ສານປະຊາຊົນແຂວງ, ວຽກງານຂອງ ສພຂ; ນອກນັ້ນ, ຜູ້ເຂົ້າຮ່ວມຍັງໄດ້ສຸມໃສ່ປະກອບຄຳຄິດເຫັນໃສ່ບັນດາວຽກງານດັ່ງກ່າວຢ່າງມີຈຸດສຸມ ເພື່ອເຮັດໃຫ້ເນື້ອໃນມີຄວາມຖືກຕ້ອງ ສອດຄ່ອງ ສົມບູນ, ສາມາດນຳເຂົ້າພິຈາລະນາໃນກອງປະຊຸມໃຫ້ທ່ວງທັນກັບເວລາ.

ຕອນທ້າຍ, ທ່ານ ອ່ອນຈັນ ຄຳພາວົງ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຄວາມເປັນເອກະພາບບັນດາເນື້ອໃນທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 8 ແລະ ຊົມເຊີຍຕໍ່ບົດບັນທຶກຮ່ວມຂອງສອງພາກສ່ວນ ເພື່ອໃຫ້ມີຄວາມສະດວກ, ຖືກຕ້ອງສອດຄ່ອງໃນການຈັດຕັ້ງປະຕິບັດວຽກງານ; ພ້ອມທັງຮຽກຮ້ອງໃຫ້ພາກສ່ວນທີ່ຮັບຜິດຊອບດ້ານເນື້ອໃນ ໂດຍສະເພາະການສ້າງນິຕິກຳໃຕ້ກົດໝາຍຮີບຮ້ອນປັບປຸງໃຫ້ສຳເລັດ, ທັນພິຈາລະນາໃນກອງປະຊຸມຕາມຄາດໝາຍທີ່ວາງໄວ້.

ແຫຼ່ງຂ່າວແຈ້ງໃຫ້ຮູ້ອີກວ່າ: ວັນທີ 08 ພະຈິກ, ທ່ານ ນາງ ອຸ່ນຫຼ້າ ອ້ຽງລໍລາດ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງ ພ້ອມດ້ວຍຄະນະ ໄດ້ນຳເອົາເຄື່ອງນຸ່ງຫົ່ມ, ເຄື່ອງໃຊ້ສອຍທີ່ຈຳເປັນ ແລະ ຢາປົວພະຍາດຈຳນວນໜຶ່ງ ໄປມອບໃຫ້ຄະນະສສຂປະຈຳເຂດເລືອກຕັ້ງເມືອງນາແລ ເພື່ອນຳໄປຊ່ວຍເຫຼືອພໍ່ແມ່ປະຊາຊົນທີ່ຖືກຜົນກະທົບຈາກໄພນ້ຳຖ້ວມ; ຕາງໜ້າກ່າວຮັບໂດຍທ່ານ ທຳມະວົງ ບຸນຖາວອນ ຫົວໜ້າຄະນະ ສສຂ ປະຈຳເຂດເລືອກຕັ້ງເມືອງນາແລ.

ໂອກາດດຽວກັນ, ສາມອົງການຈັດຕັ້ງມະຫາຊົນຮາກຖານ ສພຂ ໄດ້ນຳເອົາເຄື່ອງນຸ່ງຫົ່ມ, ເຂົ້າສານ, ອາຫານແຫ້ງ ແລະເຄື່ອງໃຊ້ສອຍຕ່າງໆລວມມູນຄ່າທັງໝົດ 150 ລ້ານກີບ, ເປັນເຄື່ອງຊ່ວຍເຫຼືອຈາກກອງທຶນຊ່ວຍເຫຼືອສັງຄົມຂອງສະພາແຫ່ງຊາດ ແລະ ຈາກນັກທຸລະກິດໜຸ່ມເມືອງຈັນທະບູລີ ນະຄອນຫຼວງວຽງຈັນ, ເພື່ອບັນເທົາທຸກຊ່ວຍ ເຫຼືອແກ່ນ້ອງນ້ອຍນັກຮຽນໂຮງຮຽນກິນນອນຊົນເຜົ່າ ແລະໂຮງຮຽນ ມສ ເມືອງນາແລ ທີ່ຖືກຜົນກະທົບຈາກໄພນ້ຳຖ້ວມ.

**(ນາງ ວັນນີ ແຝງບົວວັນ)**

# ຫຼວງພະບາງ-ຄອງຊັງບຸກໂດ ສົ່ງເສີມຮູບແບບ ເພື່ອການພັດທະນາ ແລະ ຄວາມຈະເລີນຮຸ່ງເຮືອງ



(ສພຂ) - ວັນທີ 29 ຕຸລາຜ່ານມາທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຫຼວງພະບາງ, ທ່ານ ວົງສະຫວັນ ເທບພະຈັນ ປະທານສະພາປະຊາຊົນແຂວງ ພ້ອມດ້ວຍຄະນະ ໄດ້ຕ້ອນຮັບທ່ານພາກຊອງມັນປະທານສະພາປະຊາຊົນແຂວງຄອງຊັງບຸກໂດ ແຫ່ງ ສາທາລະນະລັດເກົາຫຼີ ພ້ອມດ້ວຍຄະນະ ທີ່ມາຢ້ຽມຢາມ, ພົບປະແລກປ່ຽນບົດຮຽນ ແລະ ລົງນາມບົດບັນທຶກການພົວພັນຮ່ວມມືກັບ ສພຂ ຫຼວງພະບາງ.

ທ່ານ ວົງສະຫວັນ ເທບພະຈັນ ໄດ້ກ່າວຕ້ອນຮັບ ແລະ ລາຍງານສະພາບລວມໂດຍຫຍໍ້ຂອງແຂວງຫຼວງພະບາງ ໃຫ້ຄະນະຜູ້ແທນສະພາປະຊາຊົນແຂວງຄອງຊັງບຸກໂດ ຮັບຊາບ. ຈາກນັ້ນ, ສອງຝ່າຍໄດ້ແລກປ່ຽນບົດຮຽນເຊິ່ງກັນແລະກັນ, ພ້ອມທັງຄົ້ນຄວ້າເນື້ອໃນຮ່າງບົດບັນທຶກການພົວພັນຮ່ວມມືລະຫວ່າງສະພາປະຊາຊົນສອງແຂວງ ແລະ ໄດ້ຕົກລົງເຫັນດີເປັນເອກະພາບລົງນາມໃສ່ບົດບັນທຶກດັ່ງກ່າວ ເຊິ່ງມີເນື້ອໃນຕົ້ນຕໍດັ່ງນີ້: ເພີ່ມທະວີການແລກປ່ຽນແລະຮ່ວມມືມິດຕະພາບ ພາຍໃຕ້ຫຼັກການສະເໝີພາບຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ; ສະໜັບສະໜູນ, ສົ່ງເສີມໃນຫຼາກຫຼາຍຮູບແບບທາງດ້ານເສດຖະກິດ, ການສຶກສາ, ວັດທະນະທຳ, ການທ່ອງທ່ຽວ, ສາທາລະນະສຸກ, ການດັບເພີງ, ການກະສິກຳ, ບ້ານສາມສ້າງ ເພື່ອການພັດທະນາ ແລະ ຄວາມຈະເລີນຮຸ່ງເຮືອງຮ່ວມກັນ; ສົ່ງເສີມໃຫ້ມີການແລກປ່ຽນລະຫວ່າງມະຫາວິທະຍາໄລ, ນັກສຶກສາທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ແລະ ແລກປ່ຽນ-ສະໜອງແຮງງານແບບຍືນຍົງ; ແລກປ່ຽນການໄປມາຫາສູ່ກັນຂອງຄະນະຜູ້ແທນ ເພື່ອຮັດແໜ້ນສາຍພົວ ພັນມິດຕະພາບບົນພື້ນຖານຄວາມເຊື່ອໝັ້ນຕໍ່ກັນ ແລະ ການຮ່ວມມືກັນ; ໃຫ້ພະແນກການຕ່າງປະເທດຂອງແຂວງ ຫຼວງພະບາງ ແລະ ພະແນກການຮ່ວມມືມິດຕະພາບສາກົນຂອງແຂວງຄອງຊັງບຸກໂດ ເປັນໃຈກາງພົວພັນປະສານງານ ແລະ ການຮ່ວມມືກັນ.

# ຫົວພັນ ສັງລວມບັນຫາສຳຄັນເພື່ອເປັນຂໍ້ມູນ ປະກອບຄຳເຫັນໃນກອງປະຊຸມສະໄໝສາມັນເທື່ອທີ 8



(ສພຂ) - ວັນທີ 13 ພະຈິກນີ້ ທີ່ຫ້ອງປະຊຸມສະພາປະຊາຊົນ (ສພຂ) ແຂວງຫົວພັນ ໄດ້ມີກອງປະຊຸມຮ່ວມລະຫວ່າງສະພາປະຊາຊົນແຂວງກັບອົງການປົກຄອງແຂວງ ໂດຍການເປັນປະທານຮ່ວມຂອງທ່ານ ຄອນປະພັນເລືອງສີຈັນທອງປະທານສະພາປະຊາຊົນແຂວງ ແລະ ທ່ານ ພຸດພັນ ແກ້ວວົງໄຊ ຄະນະປະຈຳພັກແຂວງ, ຮອງເຈົ້າແຂວງ, ມີບັນດາທ່ານກຳມະການພັກແຂວງ, ຄະນະປະຈຳ ແລະຄະນະເລຂາທິການ ສພຂ, ຫົວໜ້າ ແລະຮອງຫົວໜ້າພະແນກການ, ອົງການທຽບເທົ່າຂັ້ນແຂວງ,ສານປະຊາຊົນແຂວງ, ອົງການໄອຍະການປະຊາຊົນແຂວງ, ແນວລາວສ້າງຊາດແຂວງ, 3 ອົງການຈັດຕັ້ງມະຫາຊົນແຂວງ, ສະຫະພັນນັກຮົບເກົ່າແຂວງ, ສອງກອງບັນຊາການແຂວງ ແລະ ພະນັກງານຈາກຂະແໜງການທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຮັບຟັງບົດລາຍງານການເຄື່ອນໄຫວວຽກງານທີ່ພົ້ນເດັ່ນປະຈຳປີ 2024 ແລະ ທິດທາງປະຈຳປີ 2025 ຂອງແຂວງ; ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງປະຈຳປີ2024ແລະທິດທາງແຜນການປະຈຳປີ 2025; ການຈັດຕັ້ງປະຕິບັດສອງວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ; ການເຄື່ອນໄຫວວຽກງານປະຈຳປີ 2024 ແລະທິດທາງແຜນການປີ2025 ຂອງອົງການກວດກາລັດແຂວງ; ການຈັດຕັ້ງປະຕິບັດວຽກງານ 3 ສ້າງ ຕາມມະຕິສະພາແຫ່ງຊາດ ສະບັບເລກທີ 02/ສພຊ, ລົງວັນທີ 28 ມັງກອນ 2016 ວ່າດ້ວຍການຈັດຕັ້ງປະຕິບັດວຽກງານສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ; ແລະ ບັນຫາສຳຄັນອື່ນໆຂອງແຂວງຈາກຂະແໜງການທີ່ກ່ຽວຂ້ອງ. ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ພ້ອມກັນຄົ້ນຄວ້າປະກອບຄຳຄິດຄຳເຫັນຢ່າງມີຈຸດສຸມ, ກົງໄປກົງມາ ຕໍ່ບັນດາບົດລາຍງານຂ້າງເທິງ ໃຫ້ມີເນື້ອໃນລະອຽດ, ຄົບຖ້ວນ ແລະ ສົມບູນ ເພື່ອເປັນການສັງລວມບັນຫາສຳຄັນພື້ນຖານຂອງແຂວງ ໃຫ້ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ ນຳໄປເປັນຂໍ້ມູນປະກອບຄຳຄິດຄຳເຫັນໃນກອງປະຊຸມສະໄໝສາມັນເທື່ອທີ8ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ເພື່ອຄວາມເປັນເອກະພາບ, ແທດເໝາະກັບສະພາບຄວາມເປັນຈິງຂອງແຂວງ ໃນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຂ ຊຸດທີ II.

ຕອນທ້າຍ, ປະທານກອງປະຊຸມໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ອົງການປົກຄອງແຂວງ ທີ່ມີຄວາມພະຍາຍາມເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານຂອງຕົນຕາມມະຕິກອງປະຊຸມສະພາປະຊາຊົນແຂວງໄດ້ພິຈາລະນາຮັບຮອງເອົາ ໂດຍສະເພາະແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ຕິດພັນກັບການຈັດຕັ້ງປະຕິບັດສອງວາລະແຫ່ງຊາດ ເຫັນວ່າມີຫຼາຍອັນພົ້ນເດັ່ນ. ທ່ານຍັງຮຽກຮ້ອງທຸກພາກສ່ວນກ່ຽວຂ້ອງຂອງອົງການປົກຄອງແຂວງ ຈົ່ງເອົາໃຈໃສ່ຮີບຮ້ອນປັບປຸງບົດລາຍງານຂອງຕົນຕາມການປະກອບຄຳຄິດຄຳເຫັນ ໃຫ້ມີເນື້ອໃນຄົບຖ້ວນ, ຊັດເຈນ ແລະ ຖືກຕ້ອງຕາມມະຕິຂອງ ສພຊ ກໍຄື ສພຂ ທີ່ໄດ້ພິຈາລະນາຮັບຮອງເອົາ; ພ້ອມນີ້, ຕ້ອງຍົກສູງປະສິດທິພາບດ້ານກົນໄກການປະສານງານລະຫວ່າງສພຂກັບອົງການປົກຄອງແຂວງໃຫ້ມີຄວາມຄ່ອງຕົວ, ເປັນເອກະພາບ ແລະທັນຕາມກຳນົດເວລາ.

ແຫຼ່ງຂ່າວແຈ້ງໃຫ້ຮູ້ອີກວ່າ: ໃນໄລຍະທ້າຍເດືອນຕຸລາຜ່ານມາ, ທ່ານ ຄຳຟອງ ກົ້ວມີໄຊຮອງປະທານສະພາປະຊາຊົນແຂວງ ພ້ອມດ້ວຍຄະນະ ໄດ້ນຳເອົາອຸປະກອນດອກໄຟໂຊລາເຊວ 1 ຊຸດ, ຜ້າຫົ່ມ ແລະ ເຂົ້າສານຈຳນວນໜຶ່ງ ລວມມູນຄ່າ 27 ລ້ານກວ່າກີບ ໄປມອບໃຫ້ແກ່ພະນັກງານນັກຮົບທີ່ປະຈຳຢູ່ແກ່ວເໜັ້ນ ກຸ່ມຜາຖີ່ ເມືອງຊຳເໜືອ ເພື່ອປະກອບເຂົ້າໃນການຕິດຕັ້ງໄຟໃນຄ້າຍດັ່ງກ່າວ; ກ່າວຮັບໂດຍທ່ານ ພັທ. ແກ້ງສິດ ສົມພາວົງ ຮອງກອງພັນ, ຫົວໜ້າເຕັກນິກກອງພັນ 163 ເຊິ່ງມີສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງຊຳເໜືອ ແລະ ນາຍທະຫານ ເຂົ້າຮ່ວມ.

ທ່ານ ສີຄຳ ບຸນມີໄຊ ປະທານຄະນະກຳມະການວັດທະນະທຳ-ສັງຄົມແລະບັນດາເຜົ່າພ້ອມດ້ວຍທີມງານກໍໄດ້ໄປຢ້ຽມຢາມໂຮງຮຽນສາມັນກິນນອນຊົນເຜົ່າທີ່ເມືອງວຽງໄຊ ພ້ອມທັງນຳເອົາເຄື່ອງນຸ່ງຫົ່ມແລະອາຫານແຫ້ງຈຳນວນໜຶ່ງ ລວມມູນຄ່າ 8,913,000 ກີບ ມອບໃຫ້ໂຮງຮຽນ ເຊິ່ງຮັບກ່າວຮັບໂດຍທ່ານ ຫຼ້າສຸກັນ ອິນທະວົງ ຮອງອຳນວຍການໂຮງຮຽນດັ່ງກ່າວ ແລະ ໄດ້ຕາງໜ້າການນຳໂຮງຮຽນ, ຄູ-ອາຈານ, ພະນັກງານ ແລະ ບັນດານ້ອງນັກຮຽນ ສະແດງຄວາມຮູ້ບຸນຄຸນ ແລະ ຂອບໃຈຕໍ່ຄະນະທີມງານທີ່ໄດ້ມອບເຄື່ອງໃຫ້ໃນຄັ້ງນີ້.

**(ນາງ ປຸ້ຍນິຕາ ເພັງມີໄຊ)**



# ຍົກສູງຄວາມສາມາດການສ້າງ ແລະ ປັບປຸງນິຕິກຳຂັ້ນທ້ອງຖິ່ນ




(ສພຂ) - ວັນທີ 5-6 ພະຈິກຜ່ານມາ ທີ່ສະໂມສອນເມືອງສຸຂຸມາ, ສະພາປະຊາຊົນແຂວງ (ສພຂ) ຈຳປາສັກ ໄດ້ຈັດກອງປະຊຸມເຝິກອົບຮົມຍົກສູງຂີດຄວາມສາມາດໃນການສ້າງແລະປັບປຸງນິຕິກຳຂັ້ນທ້ອງຖິ່ນ ໃຫ້ແກ່ບັນດາພະແນກການ-ກົມກອງອ້ອມຂ້າງແຂວງ, ອົງການທຽບເທົ່າຂັ້ນແຂວງ ແລະ ພະນັກງານ ສພຂ ໂດຍການເປັນປະທານຂອງທ່ານ ສົມສີ ມະນີນິນກຳມະການພັກແຂວງ,ຮອງປະທານສະພາປະຊາຊົນແຂວງ ເຊິ່ງມີບັນດາທ່ານໃນຄະນະປະຈຳ ສພຂ ເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການບັນລະຍາຍເອກະສານ 3 ຫົວຂໍ້ຄື: 1. ການສ້າງນິຕິກຳຂັ້ນແຂວງ, 2. ການພິຈາລະນາຮັບຮອງນິຕິກຳໃຕ້ກົດໝາຍຂອງສະພາປະຊາຊົນຂັ້ນແຂວງ, 3. ການຕິດຕາມກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ. ຈາກນັ້ນ, ຜູ້ເຂົ້າຮ່ວມ ໄດ້ຍົກສູງຄວາມຮັບຜິດຊອບໃນການຮັບຟັງ, ຄົ້ນຄວ້າ ແລະ ປະກອບຄວາມຄິດຄວາມເຫັນຢ່າງກົງໄປກົງມາ ແລະ ມີລັກສະນະສ້າງສັນ ເຮັດເນື້ອໃນກອງປະຊຸມມີຄວາມໝາຍເລິກເຊິ່ງ ບົນພື້ນຖານຄວາມຖືກຕ້ອງ, ຄົບຖ້ວນຕາມລະດັບແຜນການທີ່ວາງໄວ້.

ທ່ານ ສົມສີ ມະນີນິນ ໄດ້ສະແດງຄວາມຊົມເຊີຍຕໍ່ບັນດາທ່ານຜູ້ແທນທີ່ໄດ້ເຂົ້າຮ່ວມຢ່າງສຸດກົກສຸດປາຍ, ມີຄວາມຮັບຜິດຊອບສູງຕໍ່ການປະຕິບັດຕາມວາລະ, ລະບຽບການຂອງກອງປະຊຸມ ແລະເປັນເຈົ້າການຄົ້ນຄວ້າປະກອບຄຳເຫັນ, ແລກປ່ຽນບົດຮຽນດ້ວຍບັນຍາກາດທີ່ຟົດຟື້ນ, ມີລັກສະນະສ້າງສັນ ເຮັດໃຫ້ເນື້ອໃນກອງປະຊຸມຄົບຖ້ວນ, ອຸດົມສົມບູນແລະສາມາດນຳໄປໝູນໃຊ້ຢູ່ໃນກົມກອງຂອງຕົນໄດ້.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPs) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ ສົມທົບກັບງົບປະມານຂອງຄະນະເລຂາທິການສະພາປະຊາຊົນແຂວງຈຳປາສັກ.

**(ສົມວິຈິດ ໄຊມິນຕີ)**








# ການຂຽນດ້ວຍມືສ້າງຄຸນນະພາບ ຕໍ່ການຄິດ ແລະ ການຮຽນຮູ້

# ດົ້ນກົບເມກ

ໂລກປັດຈຸບັນ ເຖິງແມ່ນວ່າທົ່ວໂລກຈະນຳໃຊ້ຄອມພິວເຕີພິມລາຍງານ-ເຮັດວຽກແທນການຂີດຂຽນ ທັງງ່າຍ ສະດວກ ວ່ອງໄວ ເຊິ່ງເປັນມາດຕະຖານໃຊ້ກັນທົ່ວໂລກ ມັນກໍດີວ່ອງໄວ ຈົນວ່າບໍ່ມີໃຜຢາກຂຽນດ້ວຍມືໃນບາງໜ້າວຽກ ແຕ່ຜົນວິໄຈຂອງນັກວິຊາການຕ່າງປະເທດໄດ້ວິໄຈອອກມາວ່າ ໃນຂະບວນການຮຽນຮູ້ ເຂົ້າໃຈວ່າເນັ້ນໃນໂຮງຮຽນປະຖົມ-ມັດທະຍົມ ຫຼື ບາງວິທະຍາໄລ ຖ້າໃຊ້ການຂຽນຈະສົ່ງຜົນດີສູງຕໍ່ການໃຊ້ສະໝອງຄິດແລະການຮຽນຮູ້,ຜົນການວິໄຈຍັງຊີ້ບອກວ່າ: ການຂຽນດ້ວຍມື ມີຜົນດີຕໍ່ການຮຽນຮູ້ອັກສອນຕົວໜັງສື, ການອ່ານ ແລະ ການສະກົດຄຳ ຫຼື ແຕ່ງປະໂຫຍກ ການຂຽນດ້ວຍມືສຳລັບອະນຸບານ-ປະຖົມ-ມັດທະຍົມ-ມະຫາວິທະຍາໄລ ມັນສົ່ງຜົນດີຕໍ່ການກະຕຸ້ນສ້າງວົງຈອນປະສາດໃນສະໝອງ ທີ່ກ່ຽວຂ້ອງກັບການອ່ານ, ການຂຽນດ້ວຍມື ເຮັດໃຫ້ຜູ້ຂຽນຈື່ຈຳໄດ້ດີກວ່າການພິມ; ການຂຽນດ້ວຍມືມັນສ້າງການຄິດໃນສະໝອງວ່າຕົວອັກສອນແຕ່ລະຕົວມັນຈະຂີດຄົດໂຄ້ງໂງຢູ່ບ່ອນໃດ; ດັ່ງນັ້ນ, ມັນຈຶ່ງສົ່ງຜົນສຳພັນກັນຕໍ່ລະບົບການຄິດສ້າງຄວາມຈື່ຈຳດີກວ່າການພິມ.

ຜູ້ຂຽນເອງເຄີຍພົບເຫັນຜູ້ບໍລິຫານ, ຜູ້ນຳຫຼາຍທ່ານ ມັກຂີດຂຽນເປັນບັນທຶກ, ຈົດໝາຍ, ບົດຄຳເຫັນ; ສິ່ງວຽກເປັນລາຍມືງົດງາມ ເພາະຢ່າລືມວ່າໃຜກໍຕາມ ຫາກຝຶກຂຽນເປັນປະຈຳ ມັນຍັງຊ່ວຍຂັດເກົາສຳນວນພາກ, ສ້າງປະໂຫຍກສຳຄັນໜ້ອຍຫຼາຍຫຼຸດລື່ນ ຫຼື ມີນ້ຳໜັກຕ່າງກັນ, ຜູ້ມັກຂຽນເອງກໍຈະຍັງໄດ້ສັກກະຍະພາບທາງການຄິດດີເລີດກວ່າຜູ້ຂີ້ຄ້ານຂຽນ.

ສັງລວມໄດ້ວ່າໃນຂະບວນການຮຽນຮູ້ຈາກຂັ້ນໄດຫາຂັ້ນໄດ ເຮົາຈະເນັ້ນການຂຽນໃຫ້ຫຼາຍ ແລະ ໃນໜ້າວຽກງານທີ່ຈຳເປັນ ເຮົາກໍຕ້ອງໃຊ້ຄອມພິວເຕີຕາມສາກົນນິຍົມ ແຕ່ກໍບໍ່ຄວນປະຖິ້ມການຂຽນດ້ວຍມືນໍ!.






# ວິທີເຮັດວຽກ

**ພາກທີ 6**
**ວິທີນຳ**

4. ພວກເຮົາເດັດຂາດບໍ່ຄວນແລ່ນຕາມກົ້ນປະຊາຊົນ. ແຕ່ວ່າຕ້ອງຊ່າງລວບລວມເອົາຄວາມເຫັນຂອງປະຊາຊົນ ເອົາມາເຮັດໃຫ້ກາຍເປັນແນວທາງເພື່ອນຳປະຊາຊົນເຮັດຕາມ. ຕ້ອງເອົາວິທີປຽບທຽບຂອງປະຊາຊົນ ເອົາວິທີຄິດພິຈາລະນາຂອງປະຊາຊົນໃຊ້ເພື່ອແກ້ໄຂບັນຫາ, ແຕ່ຕ້ອງເອົາວິທີອັນນັ້ນມາເຮັດໃຫ້ກາຍເປັນວິທີນຳພາປະຊາຊົນ.

5. ຕ້ອງເອົາການເມືອງຍັດເຂົ້າໃສ່ຫົວຄົນພານ, ເພາະວ່າການເມືອງນັ້ນແມ່ນສິນທຳອັນຖືກຕ້ອງ, ອັນຈະຊ່ວຍສ້າງຄົນຊົ່ວໃຫ້ກາຍເປັນຄົນດີ. ແຕ່ເມື່ອກ່ອນ ອັນໃດກໍມີແຕ່ຊັ້ນສູງໂຍນລົງມາໃຫ້ຊັ້ນລຸ່ມ. ບັດນີ້ຊັ້ນລຸ່ມກໍຕ້ອງມີໜ້າທີ່ໂຍນຂຶ້ນໃສ່ຊັ້ນສູງເໝືອນກັນ. ດ້ວຍວ່າໃນດ້ານການເມືອງນີ້ ຊັ້ນສູງ ແລະ ຊັ້ນລຸ່ມກໍລ້ວນແຕ່ອາດຈະມີຂໍ້ບົກພ່ອງບໍ່ຫຼາຍກໍໜ້ອຍ ໂດຍບໍ່ມີໃຜຈະຫຼີກເວັ້ນໄດ້. ເຮັດແນວນັ້ນ, ນະໂຍບາຍ, ພະນັກງານ ແລະ ປະຊາຊົນຈະເຂົ້າໃຈເປັນເອກະພາບກັນ, ພັກຂອງເຮົາຈຶ່ງຈະຂະຫຍາຍກວ້າງຂວາງອອກຢ່າງວ່ອງໄວ.

ອ່ານຕໍ່ສະບັບໜ້າ...

# ຄະນະປະຈຳ...

(ຕໍ່ຈາກໜ້າ 1)

ການເມືອງສູນກາງພັກ ສະບັບເລກທີ 04/ກມສພ, ລົງວັນທີ 11 ເມສາ 2024 ວ່າດ້ວຍການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງໃນໄລຍະໃໝ່ ເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ໂດຍສຸມໃສ່ຂົງເຂດບູລິມະສິດຂອງການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ.

2. ສຸມໃສ່ປະຕິບັດຄາດໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ແຜນເງິນຕາແລະວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ສຳລັບປີ 2025 ໃຫ້ເປັນບຸລິມະສິດ, ສອດຄ່ອງ, ກົມກຽວ ແລະ ບັນລຸຕາມແຜນການ; ຈັດຕັ້ງປະຕິບັດບັນດາມາດຕະການ ທີ່ໄດ້ກຳນົດໄວ້ຢ່າງເຂັ້ມງວດ, ໃນນັ້ນ ສະເໜີໃຫ້ສຸມໃສ່ແກ້ໄຂບັນຫາທີ່ເຄັ່ງຮ້ອນດ້ານເສດຖະກິດ-ສັງຄົມທີ່ຍັງຄົງຄ້າງ ແລະ ມີຄວາມຄືບໜ້າໜ້ອຍໃນປີຜ່ານມາ ແລະ ໃນປັດຈຸບັນ ເປັນຕົ້ນ:

1) ສືບຕໍ່ແກ້ໄຂບັນຫາເງິນເຟີ້, ບັນຫາໜີ້ສິນ, ການແກ້ໄຂຜົນກະທົບຈາກໄພນ້ຳຖ້ວມ ແລະຄຸ້ມຄອງລາຄາສິນຄ້າທີ່ຈຳເປັນ ໃຫ້ມີສະຖຽນລະພາບແລະສົມເຫດສົມຜົນເປັນຕົ້ນອາຫານ, ນ້ຳມັນເຊື້ອໄຟ, ເຄື່ອງອຸປະໂພກ-ບໍລິໂພກ ທີ່ກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ, ພະນັກງານ-ລັດຖະກອນ, ທະຫານ-ຕຳຫຼວດ ແລະ ເອົາໃຈໃສ່ສືບຕໍ່ຈັດຕັ້ງປະຕິບັດມາດຕະການໃຫ້ເປັນລະບົບຄົບຊຸດ ເຂັ້ມງວດຢ່າງແຂງແຮງ ຕິດພັນກັບທຸກຂະແໜງການຄື: (1) ມາດຕະການທາງດ້ານເງິນຕາ ລວມທັງມາດຕະການຕໍ່ອັດຕາແລກປ່ຽນ, (2) ມາດຕະການດ້ານການເງິນ-ງົບປະມານ, (3) ມາດຕະການດ້ານການຜະລິດ, (4) ມາດຕະການດ້ານການຄ້າ, (5) ມາດຕະການດ້ານຈິດຕະສາດ-ສັງຄົມ.

2) ແກ້ໄຂບັນຫາເຄັ່ງຮ້ອນດ້ານສັງຄົມ ແລະ ເອົາໃຈໃສ່ຈັດຕັ້ງປະຕິບັດບັນດາຄາດໝາຍທີ່ມີຄວາມສ່ຽງບໍ່ທັນບັນລຸ ໂດຍສຸມໃສ່: (1) ສ້າງ ແລະ ປັບປຸງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໃຫ້ເປັນລະບົບຄົບຊຸດ; (2) ຍົກສູງຄຸນນະພາບຂອງການສຶກສາ, ສາທາລະນະສຸກ ແລະແຮງງານ, ປະເມີນຄືນແລະປັບປຸງຫຼັກສູດ ຕຳລາການຮຽນ-ການສອນ ເພື່ອໃຫ້ແທດເໝາະກັບສະພາບຄວາມເປັນຈິງຂອງເສດຖະກິດ-ສັງຄົມໃນປັດຈຸບັນ, ເອົາໃຈໃສ່ແກ້ໄຂຊີວິດການເປັນຢູ່ຂອງພະນັກງານ-ລັດຖະກອນ ເພື່ອຫຼຸດຜ່ອນຄວາມເລື່ອມລ້ຳໃນສັງຄົມ; (3) ເອົາໃຈໃສ່ເຝິກ ແລະ ສ້າງວິຊາຊີບໃຫ້ມີຄວາມຫຼາກຫຼາຍ, ຍົກລະດັບສີມືແຮງງານໃຫ້ມີຄວາມຊຳນານງານ, ມີລະບຽບວິໄນສາມາດຕອບສະໜອງຄວາມຕ້ອງການຂອງຫົວໜ່ວຍແຮງງານ; (4) ປຸກລະດົມການມີສ່ວນຮ່ວມຂອງສັງຄົມໃນການຊຸກຍູ້ການປະກອບສ່ວນສະສົມທຶນເຂົ້າໃນກອງທຶນຕ່າງໆຂອງສັງຄົມ; (5) ເອົາໃຈໃສ່ພັດທະນາແຫຼ່ງທ່ອງທ່ຽວທາງທຳມະຊາດ, ວັດທະນະທຳ, ປະຫວັດສາດ ແລະ ກະສິກຳ ໃຫ້ໄດ້ມາດຕະຖານ, ສະອາດ, ປອດໄພ; (6) ຄົ້ນຄວ້າ ແລະ ເພີ່ມງົບປະມານເຂົ້າໃສ່ຂົງເຂດວັດທະນະທຳ-ສັງຄົມໃຫ້ຫຼາຍຂຶ້ນ ເພື່ອໃຫ້ສົມຄູ່ກັບວຽກງານຕົວຈິງ ແລະ ການພັດທະນາໃນປັດຈຸບັນ.

3) ແກ້ໄຂບັນຫາເຄັ່ງຮ້ອນທາງດ້ານສິ່ງແວດລ້ອມ ແລະ ມົນລະພິດ ຈາກໂຄງການລົງທຶນ ແລະ ໂຄງການຂຸດຄົ້ນແຮ່ທາດຕ່າງໆ ໂດຍປະຕິບັດມາດຕະການແກ້ໄຂຢ່າງຮັດກຸມ, ຕາມຂັ້ນຕອນຂອງກົດໝາຍ ແລະ ລະບຽບການທີ່ກຳນົດໄວ້ຢ່າງເຂັ້ມງວດ.

4) ສ້ອມແປງເສັ້ນທາງທີ່ຊຸດໂຊມເປ່ເພ ໃຫ້ເຂົ້າສູ່ສະພາບປົກກະຕິ, ສາມາດຮັບປະກັນການຂົນສົ່ງສິນຄ້າແລະການສັນຈອນໄປມາຂອງປະຊາຊົນ.

5) ເອົາໃຈໃສ່ແກ້ໄຂຜົນການກວດສອບ ແລະ ກວດກາຕາມມະຕິກອງປະຊຸມສະພາແຫ່ງຊາດແລະມອບໃຫ້ອົງການກວດສອບແຫ່ງລັດເຂົ້າຮ່ວມແຕ່ຫົວທີໃນການສ້າງແຜນງົບປະມານແຫ່ງລັດແລະແຜນການລົງທຶນຂອງລັດ.

6) ສືບຕໍ່ປະຕິບັດມະຕິຄະນະປະຈຳສະພາແຫ່ງຊາດກ່ຽວກັບການຮັບຮູ້ສິດນຳໃຊ້ທີ່ດິນໃຫ້ປະຊາຊົນທີ່ອາໄສຢູ່ 3 ປະເພດປ່າ ແລະ ຊຸກຍູ້ການອອກໃບຕາດິນໃຫ້ບັນລຸຕາມແຜນການ.

3. ສຸມໃສ່ກະກຽມສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 5 ປີຄັ້ງທີ X ແລະ ແຜນການປະຈຳປີ 2026 ຕິດພັນກັບການສ້າງບັນຊີໂຄງການລົງທຶນຂອງລັດໂດຍມີການປະສານສົມທົບແຕ່ຫົວທີກັບສະພາແຫ່ງຊາດກ່ອນນຳສະເໜີຕໍ່ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດຊຸດທີ X; ສະເໜີໃຫ້ພິຈາລະນາເພີ່ມງົບປະມານໃສ່ການລົງທຶນຂອງລັດໃຫ້ເພີ່ມຂຶ້ນ.

4. ເອົາໃຈໃສ່ຈັດຕັ້ງປະຕິບັດນະໂຍບາຍ ເພື່ອສ້າງສະພາບແວດລ້ອມການລົງທຶນ, ການດຳເນີນທຸລະກິດຢ່າງສະດວກ, ວ່ອງໄວ, ໂປ່ງໃສ ແລະ ຍຸຕິທຳ; ສົ່ງເສີມການແຂ່ງຂັນ, ການລົງທຶນພາຍໃນແລະຕ່າງປະເທດດ້ວຍມາດຕະການບຸລິມະສິດທີ່ແຂງແຮງ, ສືບຕໍ່ດຶງດູດເອົາການລົງທຶນຢ່າງມີຈຸດສຸມ ເພື່ອສ້າງຖານການຜະລິດທີ່ໝັ້ນຄົງ, ມີການປຸງແຕ່ງ ໂດຍສະເພາະໂຄງການຜະລິດເພື່ອທົດແທນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ, ຊຸກຍູ້ການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ໃນຂະແໜງການທີ່ ສປປ ລາວ ມີທ່າແຮງ.

5. ຮີບຮ້ອນຈັດສັນງົບປະມານການລົງທຶນລັດຂອງບັນດາຂະແໜງການສູນກາງ ແລະ ທ້ອງຖິ່ນ ປະຈຳປີ 2025 ໃຫ້ສຳເລັດໂດຍໄວເພື່ອໃຫ້ທັນນຳໄປຈັດຕັ້ງປະຕິບັດໃນວັນທີ 1 ມັງກອນ 2025; ຄົ້ນຄວ້າຈັດສັນງົບປະມານການລົງທຶນລັດ ຕາມໂຄງປະກອບໜີ້ສິນ, ສືບຕໍ່ ແລະ ໃໝ່, ໃນນັ້ນໃຫ້ສຸມໃສ່ການຊຳລະໜີ້ສິນເປັນສ່ວນຫຼາຍ ແລະ ໂຄງການສືບຕໍ່ທີ່ໃກ້ຈະສຳເລັດໃຫ້ໄດ້ນຳໃຊ້ໂດຍໄວ ແລະ ໂຄງການສະເໜີໃໝ່ທີ່ເປັນບຸລິມະສິດ; ຈັດສັນໂຄງການກໍ່ສ້າງຕ້ານຕາຝັ່ງເຈື່ອນ ທີ່ເປັນຈຸດຫຼໍ່ແຫຼມ ແລະ ຈຸດທີ່ມີການເຊາະເຈື່ອນຢ່າງຮ້າຍແຮງ ເປັນບຸລິມະສິດເຂົ້າໃນແຜນ ການລົງທຶນຂອງລັດ ເພື່ອປົກປັກຮັກສາເຂດນ້ຳແດນດິນ ຂອງ ສປປລາວ ໄວ້; ນຳໃຊ້ຫຼັກການຈັດສັນການລົງທຶນໃນບ້ວງປົກກະຕິ, ຈົດຮັບ-ຈົດຈ່າຍ ແລະ ລົງທຶນອື່ນ ແລະ ບັນດາກອງທຶນ ໃຫ້ເປັນເອກະພາບ, ມີຈຸດສຸມ, ຍຸຕິທຳ; ກຳນົດທິດທາງລວມໃນການຊຳລະໜີ້ສິນໃຫ້ຈະແຈ້ງຊັດເຈນ ເປັນຕົ້ນການນຳໃຊ້ບ້ວງປົກກະຕິ ແລະ ບ້ວງເງິນເກີນແຜນ; ກຳນົດຫຼັກການດັດແກ້ເພີ່ມມູນຄ່າໂຄງການລົງທຶນ ໃຫ້ໄປຕາມສະພາບເງິນເຟີ້ແລະເສດຖະກິດໃນປັດຈຸບັນ.

6. ເອົາໃຈໃສ່ນຳໃຊ້ກອງທຶນທາງ ສຸມໃສ່ບູລະນະສ້ອມແປງເສັ້ນທາງທີ່ເປ່ເພ ແລະ ໄດ້ຮັບຜົນກະທົບຈາກໄພພິບັດທຳມະຊາດ ໃຫ້ສຳເລັດ ເພື່ອຮັບປະກັນການຄົມມະນາຄົມ-ຂົນສົ່ງ ໃຫ້ກັບຄືນສູ່ສະພາບປົກກະຕິໂດຍໄວ, ຄົ້ນຄວ້າປັບປຸງນິຕິກຳໃຕ້ກົດໝາຍ ໃນການຄຸ້ມຄອງ ແລະ ຕິດຕາມກວດກາລົດບັນ

ອ່ານຕໍ່ໜ້າ 9

## ຄະນະປະຈຳ...

(ຕໍ່ຈາກໜ້າ 8)

ທຸກສິນຄ້ານ້ຳໜັກເກີນ ແລະ ລົດຂົນສົ່ງຕ່າງປະເທດທີ່ມາໃຫ້ບໍລິການຢູ່ ສປປລາວ ພ້ອມທັງມີມາດຕະການທີ່ເຂັ້ມງວດຕໍ່ຜູ້ລະເມີດ.

7. ເອົາໃຈໃສ່ຊຸກຍູ້ສົ່ງເສີມການຜະລິດໃຫ້ແຂງແຮງຂຶ້ນກວ່າເກົ່າ ໂດຍສະເພາະສິນຄ້າກະສິກຳ, ໃຫ້ຂະແໜງກະສິກຳແລະປ່າໄມ້ ເປັນເຈົ້າການປະກອບສ່ວນຢ່າງຕັ້ງໜ້າໃນການຍົກສູງຄຸນນະພາບການຜະລິດ ໂດຍສະເພາະແມ່ນການປະກອບສ່ວນຂອງບັນດາສູນ, ສະຖານີຄົ້ນຄວ້າກະສິກຳໃນແຕ່ລະທ້ອງຖິ່ນ; ພ້ອມດຽວກັນນັ້ນ, ກໍສະເໜີໃຫ້ຄົ້ນຄວ້າປະເມີນຄືນບັນດາລາຍການສິນຄ້າທີ່ສາມາດຜະລິດໄດ້ຢູ່ພາຍໃນ ເປັນຕົ້ນ ຝຸ່ນ, ອາຫານສັດ, ສະບຽງອາຫານ ແລະ ອື່ນໆ ທີ່ສາມາດຮັບປະກັນການສະໜອງແກ່ການຊົມໃຊ້ໄດ້ພຽງພໍ, ໃຫ້ຈຳກັດການນຳເຂົ້າສິນຄ້າລາຍການນັ້ນ ເພື່ອຫັນມາສົ່ງເສີມການຜະລິດພາຍໃນໃຫ້ຫຼາຍຂຶ້ນ.

8. ເອົາໃຈໃສ່ຄຸ້ມຄອງ, ປົກປັກຮັກສາບັນດາໂຄງການຊົນລະປະທານ ເພື່ອຮັບປະກັນການສະໜອງນ້ຳໃຫ້ແກ່ການຜະລິດຂອງຊາວກະສິກອນ ແລະ ມີມາດຕະການຄຸ້ມຄອງຢ່າງເຂັ້ມງວດຕໍ່ທີ່ດິນນາ, ທີ່ດິນກະສິກຳໃນເຂດທີ່ມີຊົນລະປະທານ ບໍ່ໃຫ້ມີການຫັນປ່ຽນໄປເປັນທີ່ດິນປະເພດອື່ນ; ພ້ອມດຽວກັນນັ້ນ, ສະເໜີໃຫ້ຄົ້ນຄວ້າຈັດສັນງົບປະມານ ເຂົ້າໃນໂຄງການຊົນລະປະທານທີ່ມີເງື່ອນໄຂນ້ຳໄຫຼເຂົ້າເອງ, ໂຄງການທີ່ດຳເນີນໃກ້ຈະສຳເລັດແລ້ວແລະເປັນໂຄງການທີ່ມີປະສິດທິຜົນທາງດ້ານເສດຖະກິດ, ເປັນໂຄງການບຸລິມະສິດຂອງລັດຖະບານ ເພື່ອຮັບປະກັນໃຫ້ການຜະລິດກະສິກຳ ມີຕົ້ນທຶນຕ່ຳ ສາມາດແກ່ງແຍ້ງແຂ່ງຂັນໄດ້.



9. ຄົ້ນຄວ້າສ້າງເງື່ອນໄຂໃຫ້ແກ່ຊາວກະສິກອນ ສາມາດເຂົ້າເຖິງການສະໜອງສິນເຊື່ອໃຫ້ສະດວກຂຶ້ນຕາມນະໂຍບາຍສິນເຊື່ອຕໍ່ກັບຫົວໜ່ວຍທຸລະກິດກະສິກຳ ແລະ ຫົວໜ່ວຍທຸລະກິດທີ່ຜະລິດອຸປະກອນ ແລະ ເຄື່ອງມືຮັບໃຊ້ການຜະລິດກະສິກຳ ຈຳໜ່າຍພາຍໃນ ຫຼຸດຜ່ອນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ.

10. ເອົາໃຈໃສ່ຫັນເປັນທັນສະໄໝໃນການເກັບລາຍຮັບ ຈາກຖານລາຍຮັບທີ່ເປັນທ່າແຮງໃຫ້ຫຼາຍຂຶ້ນ ເປັນຕົ້ນການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ, ອາກອນທີ່ດິນ, ພະລັງງານ, ຄ່າທຳນຽມແລະອື່ນໆ; ຫຼຸດຜ່ອນການຂໍຍົກເວັ້ນການປະຕິບັດບາງມາດຕາຂອງກົດໝາຍທີ່ຕິດພັນກັບພາສີ-ອາກອນ; ປັບປຸງໂຄງສ້າງດ້ານງົບປະມານແຫ່ງລັດ ແລະ ຄຸ້ມຄອງໜີ້ສິນສາທາລະນະບໍ່ໃຫ້ເກີນການຄວບຄຸມແລະຮັບປະກັນການຊຳລະເພື່ອບໍ່ໃຫ້ກ້າວໄປສູ່ປະເທດທີ່ບໍ່ສາມາດຊຳລະໜີ້ສິນໄດ້, ຮັບປະກັນແຫຼ່ງຄຸ່ມດ່ຽງທີ່ຍືນຍົງ, ຫຼຸດຜ່ອນການກູ້ຢືມ ເພື່ອເຮັດໃຫ້ພື້ນຖານລະບົບການເງິນແຫ່ງຊາດມີຄວາມໝັ້ນຄົງ, ມີສະຖຽນລະພາບດ້ານເສດຖະກິດມະຫາພາກ.

11. ເອົາໃຈໃສ່ຍົກສູງການຖືຄອງເງິນກີບ, ຄຸ້ມຄອງການຖືຄອງ ແລະ ໃຊ້ຈ່າຍເງິນຕາຕ່າງປະເທດ ໃຫ້ເຄັ່ງຄັດຮັດກຸມເຂົ້າຕື່ມ; ກະຈາຍຄວາມສ່ຽງດ້ານການນຳໃຊ້ເງິນຕາຕ່າງປະເທດ ເພື່ອບໍ່ໃຫ້ສະກຸນເງິນໃດໜຶ່ງຜູກມັດ, ຜູກຂາດ; ຄຸ້ມຄອງລາຍຮັບຈາກການສົ່ງອອກຜ່ານລະບົບທະນາຄານໃຫ້ບັນລຸ70% ຂຶ້ນໄປ.

12. ສືບຕໍ່ຊຸກຍູ້ການຈັດຕັ້ງປະຕິບັດມາດຕະການປະຢັດ, ຕ້ານການຟຸມເຟືອຍ ແລະ ແກ້ໄຂບັນຫາພາຫະນະທີ່ ນຳເຂົ້າບໍ່ຖືກຕ້ອງຢ່າງເຂັ້ມງວດ.

13. ຕໍ່ການສະເໜີຂອງທ່ານນາຍົກລັດຖະມົນຕີກ່ຽວກັບ:

1) ການມອບສິດໃຫ້ສະພາປະຊາຊົນຂັ້ນແຂວງໃນການພິຈາລະນາຮັບຮອງໂຄງການລົງທຶນຂອງລັດທີ່ມີມູນຄ່າສູງກວ່າ 20 ຕື້ກີບ, ຄະນະປະຈຳສະພາແຫ່ງຊາດ ເຫັນດີໂດຍພື້ນຖານ ແລະ ໃຫ້ລັດຖະບານກະກຽມປັບປຸງມາດຕາທີ່ກ່ຽວຂ້ອງຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ;

2) ການດັດແກ້ເພີ່ມລາຍຈ່າຍເກີນແຜນຂອງບັນດາແຂວງຕາມຜົນການສະຫຼຸບຂາດຕົວງົບປະມານແຫ່ງລັດປະຈຳປີ 2023 ຈຳນວນ 2,020.78 ຕື້ກີບນັ້ນ ໃຫ້ກະຊວງການເງິນລາຍງານລະອຽດ ແລະ ມີການຢັ້ງຢືນຈາກອົງການກວດສອບແຫ່ງລັດ;

3) ການອະນຸຍາດໃຫ້ລັດຖະບານນຳໃຊ້ເງິນເກີນແຜນຈາກລາຍຮັບປີ 2024 ຂອງບັນດາແຂວງ ເພື່ອນຳໃຊ້ເຂົ້າໃນປີ 2025 ເພື່ອກະຕຸ້ນເສດຖະກິດແຕ່ຫົວປີນັ້ນ ກໍໃຫ້ກະຊວງການເງິນລາຍງານລະອຽດ ແລະ ມີການຢັ້ງຢືນຈາກອົງການກວດສອບແຫ່ງລັດ ເພື່ອສະເໜີມາຫາສະພາແຫ່ງຊາດພິຈາລະນາຮັບຮອງ.

ວາດ ກະວີລາວ

## ລະດູວັນຊາດ 2 ທັນວາ

\# ສະຄັນຍຸ ເພັດສະລາດ

❈ ວາໂຍພັດຕ່ອຍຕ້ອງ ໃບຕອງຫວັ່ນວິໄຫວ
ແກວ່ງໄກວໂອນເອນ ອ່ວຍລະດູໄຫຼຍູ້
ດັ່ງເຕືອນບອກໃຫ້ຮູ້ ລະດູການຂອງຊາດ
ທັນວາກຽມຕ່າວໂຄ້ງ ເມໂຄຈາງແຈ່ມຟ້າ ອານາແຈ້ງຮຸ່ງເຮືອງ ແທ້ແລ້ວ!

❈ ເປັນການເຕືອນກ່າວແຈ້ງ ວັນໃຫຍ່ສຳຄັນ
ປວງປະຊາຊື່ນຊົມ ມ່ວນໃນມະໂນແມ້ງ
ຮັກບໍ່ເຫີຍຫາຍແຄ້ວ ຄຸນຄວາມດີດອມມິ່ງ
ສັດຈະຈິງບໍ່ແອບອ້າງ ຫົນທາງສ້າງສ່ອງລາວ ນີ້ນາ!

❈ ປວງປະຊາຮັບຕ້ອນ ສະອອນຣົ່ມຄັນທຸງ
ວົງເດືອນປີວສະບັດ ສະຫງ່າງາມເງົາແຈ້ງ
ລາວທັງຜອງຕອມເຕົ້າ ສະໜຸກໃນໃຈຊື່ນ
ວັນຄືນຜ່ານພົ້ນ ປະກາດກ້ອງຍຸກສະໄໝໃໝ່ນັ້ນນາ!

❈ 2 ທັນວາ ເອກອ້າງ ປະຊາຊ່ວຍສາມັກຄີ
ມີພັກ-ລັດນຳພາ ປະຊາຊົນເປັນເຈົ້າ
ສີວິໄລແຂງເຂັ້ມ ພັດທະນາຂັນແຂ່ງ
ທົ່ວອານາເຂດຄ້າຍ ສະບາຍແທ້ລື່ນປະມານ

❈ ເພິ່ນວ່າ ຫອມດອກໄມ້ ມາໄລຊື່ນຊົມສະເໜ
ເອ້ອວດຕາດູງາມ ຍື່ນຍໍຊຸລີນ້ອມ
2 ທັນວາ ຖະໜອມໝັ້ນ ພັນປີສະຫຼັກຂີດ
ຈິດໃຈລາວກ່ອມກ້ຽວ ໂນ້ມໜ່ຽວອະພິວາດກົ້ມ ວັນທາໄຫວ້ຈາລຶກນາມ ແທ້ແລ້ວ!



## ຫົກຫາຍ ລະບາຍ

(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)

\# ສຽມທ້ຽນ

❈ **ຫຍັບ**ມໍໃກ້ວັນຊາດທີ **2 ທັນວາ** ທີ່ຈະມາບັນຈົບຄົບຮອບ 49 ປີ ໃນປີນີ້ຫຼາຍບ່ອນມີຕົບແຕ່ງເອ້ ປະດັບລວດລາຍງາມຕາມອາຄານຫ້ອງການ ເດີ່ນອາຮາມກ້ວາງທັງກະກຽມຊຽບແຕ້ມ ຄ່າຊວັນສະຫຼອງໃຫຍ່ ທີ່ປວງຊົນລາວໄດ້ຜ່ານພົ້ນ ມີໄຊກ້າສະຫງ່າງາມ **ນັ້ນແລ້ວ!**

❈ **ກອງ**ປະຊຸມສະໄໝສາມັນ**ເທື່ອທີ 8** ເລີ່ມຕົ້ນຂຶ້ນດ້ວຍບັນຍາກາດຄຶກຄື້ນ **ສສຊ** ອ່າເອົ້າ ຫຼາຍເລື່ອງບັນຫາ ນຳສະເໜີຕໍ່ສະພາ ເພື່ອຫາວິທີແກ້ ໂດຍສະເພາະ**ເງິນກີບລາວຄ່າດ້ອຍ** ກຳລັງອ່ອນຫຼຸດລົງຫຼາຍ ຂໍໃຫ້ລັດຖະບານຊ່ວຍແກ້ໄຂ ດ່ວນໄວພະລັນພ້າວ ເພື່ອໃຫ້ລາວເຮືອງເຫຼືອມທັນສາກົນປະເທດອື່ນ ລາວຈະຢືນຢູ່ໄດ້ ຕ້ອງແກ້ໄຂປາກົດການຫຍໍ້ທໍ້ ໃຫ້ໝົດສິ້ນສາບສູນ **ທ່ານເອີຍ!**

## ຊວນຍິ້ມ

\# ແອ່ນຕຸ້ງ

### ເລື່ອງ: ບໍ່ຄາດຄິດ

ເກີດເຫດອັກຄີໄພຢູ່ໂຮງໝໍແຫ່ງໜຶ່ງ ຈຶ່ງໄດ້ມີການລະດົມພົນນັກດັບເພີງໄປຊ່ວຍ

ຫົວໜ້ານັກດັບເພີງໄດ້ແຈ້ງຜູ້ອຳນວຍການໂຮງໝໍວ່າ:

**"ສາມາດດັບໄຟໄດ້ແລ້ວ ພົບເຫັນຜູ້ບາດເຈັບ 6 ຄົນ ນອນສະຫຼົບເພາະເມົາຄວັນໄຟຢູ່ຊັ້ນໃຕ້ດິນ ສາມາດຊ່ວຍເຫຼືອດ້ວຍການຜາຍປອດ 4 ຄົນ ຕອນນີ້ອາການປອດໄພແລ້ວ ແຕ່ອີກ 2 ຄົນບໍ່ສາມາດຊ່ວຍໄດ້"**

ເມື່ອຜູ້ອຳນວຍການໄດ້ຍິນແບບນັ້ນ ກໍເປັນລົມທັນທີ ຫົວໜ້າໜ່ວຍດັບເພີງຈຶ່ງຊ່ວຍປະຖົມພະຍາບານ ເມື່ອຜູ້ອຳນວຍການຟື້ນຂຶ້ນມາ ແລ້ວຈຶ່ງບອກວ່າ:

"ຫ້ອງໃຕ້ດິນຂອງໂຮງໝໍເປັນຫ້ອງເຢັນເກັບມ້ຽນສົບຄົນຕາຍ"????????



### ຄະຕິເຕືອນໃຈ

\# ດອກຫຍ້າ

ຈຸດຢືນຕ່າງກັນ ເອົ້າໃຫ້ໜ້ອຍຈະດີ
ມີຄວາມເຂົ້າໃຈທີ່ຕ່າງກັນ ບໍ່ຖົກຖຽງກັນຈະດີ
ທັດສະນະຄະຕິຕ່າງກັນ ນິ້ງງຽບໄວ້ຈະເປັນການດີ
ເພາະບໍ່ມີໃຜໄດ້ດີ ເພາະມີປາກສຽງ

ລັດຖະສະພາຕ່າງປະເທດ

# Moldova ບັນຈຸການລວມຕົວເຂົ້າກັບ EU ໄວ້ໃນລັດຖະທຳມະນູນ

(Xinhua) - ສາທາລະນະລັດໂມນດາວີ ໄດ້ປັບປຸງລັດຖະທຳມະນູນຂອງຕົນຢ່າງເປັນທາງການ ເພື່ອກຳນົດໃຫ້ການລວມຕົວເຂົ້າກັບສະຫະພາບເອີຣົບ (ອີຢູ) ເປັນເປົ້າໝາຍຍຸດທະສາດແຫ່ງຊາດ, ເຊິ່ງເປັນຂີດໝາຍສຳຄັນໃນການສະແຫວງຫາການເຂົ້າເປັນສະມາຊິກອີຢູ; ການປັບປຸງດັ່ງກ່າວ ໄດ້ຖືກເຜີຍແຜ່ເມື່ອວັນພຸດທີ 13 ພະຈິກນີ້ ໃນຈົດໝາຍເຫດທາງລັດຖະການ.

ລັດຖະທຳມະນູນສະບັບປັບປຸງ ໄດ້ເນັ້ນໜັກເຖິງ "ເອກະລັກເອີຣົບ" ຂອງໂມນດາວີແລະໃຫ້ຄຳໝັ້ນສັນຍາວ່າປະເທດຈະເດີນຕາມເສັ້ນທາງທີ່ "ຍ້ອນກັບບໍ່ໄດ້" (irreversible) ເພື່ອກ້າວໄປສູ່ການລວມຕົວເຂົ້າກັບອີຢູ.

ໝວດໃໝ່ທີ່ມີຫົວຂໍ້ວ່າ "ການລວມຕົວເຂົ້າກັບສະຫະພາບເອີຣົບ" ໃຫ້ລາຍລະອຽດກ່ຽວກັບຄຳໝັ້ນສັນຍາຂອງໂມນດາວີ ທີ່ຈະປະຕິບັດຕາມສົນທິສັນຍາພື້ນຖານຂອງອີຢູແລະນຳມາປັບປຸງເພີ່ມຕື່ມໃນອະນາຄົດເມື່ອມີຜົນບັງຄັບໃຊ້.

ພາຍໃຕ້ຂໍ້ກຳນົດໃໝ່, ສົນທິສັນຍາ ແລະ ກົດລະບຽບຂໍ້ຜູກມັດຂອງສະຫະພາບເອີຣົບຈະມີອຳນາດເໜືອກວ່າບັນດາກົດໝາຍລະດັບຊາດທີ່ຂັດແຍ່ງກັນ ເມື່ອໂມນດາວີເຂົ້າເປັນສະມາຊິກອີຢູ ເພື່ອເນັ້ນຢ້ຳຄວາມມຸ່ງໝັ້ນໃນການເຂົ້າຮ່ວມກັບເອີຣົບຂອງໂມນດາວີ.

ການປັບປຸງດັ່ງກ່າວ ໄດ້ຮັບການຢືນຢັນໂດຍສານລັດຖະທຳມະນູນເມື່ອວັນທີ 31 ຕຸລາ, ພາຍຫຼັງການລົງປະຊາມະຕິເມື່ອວັນທີ 20 ຕຸລາ ເຊິ່ງປະຊາຊົນສ່ວນຫຼາຍໄດ້ລົງຄະແນນສຽງເຫັນດີກັບການປ່ຽນແປງລັດຖະທຳມະນູນ.




# ເຢຍລະມັນ ຈະຈັດການເລືອກຕັ້ງກ່ອນກຳນົດໃນເດືອນກຸມພາປີໜ້າ



(Xinhua) - ວິທະຍຸກະຈາຍສຽງເຢຍລະມັນ ZDF ໄດ້ລາຍງານໃນວັນອັງຄານທີ 12 ພະຈິກ 2024 ວ່າ ພັກສັງຄົມປະຊາທິປະໄຕ (SPD) ເຊິ່ງເປັນພັກລັດຖະບານ ໄດ້ບັນລຸຂໍ້ຕົກລົງກັບພັກຝ່າຍຄ້ານ ສະຫະພາບປະຊາທິປະໄຕຄຣິສຕຽນ (CDU) ແລະສະຫະພາບສັງຄົມຄຣິສຕຽນ (CSU) ເພື່ອຈັດການເລືອກຕັ້ງແຫ່ງຊາດກ່ອນກຳນົດ ໃນວັນທີ 23 ກຸມພາ 2025.

ການຕັດສິນໃຈດັ່ງກ່າວໄດ້ເລື່ອນເວລາການເລືອກຕັ້ງຈາກເດີມວັນທີ 28 ກັນຍາ 2025 ຂະນະດຽວກັນ, ທ່ານ ໂຣຟ ມຸດເຊນິຊ (Rolf Mützenich) ປະທານກຸ່ມສະມາຊິກລັດຖະສະພາ SPD ກ່າວເມື່ອວັນອັງຄານວ່າ ທ່ານນາຍົກລັດຖະມົນຕີ ໂອລາຟ ຊອລຊ໌ (Olaf Scholz) ຈະປະເຊີນກັບການລົງຄະແນນສຽງບໍ່ໄວ້ວາງໃຈໃນລັດຖະສະພາ (Bundestag) ໃນວັນທີ 16 ທັນວານີ້.

ການຕັດສິນໃຈດັ່ງກ່າວມີຂຶ້ນທ່າມກາງວິກິດການທາງການເມືອງພາຍໃນລັດຖະບານປະສົມທີ່ປົກຄອງປະເທດ; ໃນຕົ້ນເດືອນນີ້, ລັດຖະບານປະສົມຂອງ SPD, ພັກ Greens ແລະ ພັກເສລີປະຊາທິປະໄຕ (FDP) ບໍ່ສາມາດບັນລຸຂໍ້ຕົກລົງກ່ຽວກັບງົບປະມານ ເຮັດໃຫ້ທ່ານ ຊອລຊ໌ ປົດລັດຖະມົນຕີກະຊວງການເງິນ ທ່ານ ຄຣິສຕຽນ ລິນເນີ (Christian Lindner) ເຊິ່ງເປັນຜູ້ນຳຂອງ FDP; ເພື່ອເປັນການຕອບໂຕ້, FDP ໄດ້ປະກາດການຖອນຕົວອອກຈາກລັດຖະບານປະສົມ.

ນັບຕັ້ງແຕ່ນັ້ນມາ, ທ່ານ ຊອລຊ໌ ໄດ້ສະເໜີໃຫ້ມີການລົງຄະແນນສຽງບໍ່ໄວ້ວາງໃຈໃນ Bundestag ໃນວັນທີ 15 ມັງກອນ 2025; ແນວໃດກໍຕາມ, ບັນດາພັກຝ່າຍຄ້ານໄດ້ໂຕ້ແຍ່ງວ່າການລົງຄະແນນສຽງຄວນຈະຈັດຂຶ້ນໄວກວ່ານັ້ນ.

ໃນການໃຫ້ສຳພາດຄັ້ງຫຼ້າສຸດກັບສະຖານີໂທລະພາບ ARD, ທ່ານ ຊອລຊ໌ ກ່າວວ່າຈະພິຈາລະນາຈັດວາລະການລົງຄະແນນສຽງບໍ່ໄວ້ວາງໃຈກ່ອນວັນຄຣິດສະມາດ (25 ທັນວາ) ຫາກທຸກຝ່າຍທີ່ກ່ຽວຂ້ອງສາມາດບັນລຸຄວາມເປັນເອກະພາບກ່ຽວກັບກຳນົດເວລາໄດ້.

ຖ້າທ່ານ ຊອລຊ໌ ລົງຄະແນນສຽງບໍ່ໄວ້ວາງໃຈບໍ່ຜ່ານ, ປະທານາທິບໍດີອາດຈະຍຸບ Bundestag ຫຼັງຈາກນັ້ນ, ຄວນມີການເລືອກຕັ້ງໃໝ່ພາຍໃນ 60 ວັນ.

# ກົດໝາຍໃໝ່ຊູແອດ ໃຫ້ຕຳຫຼວດ 'ຍຶດສິນຄ້າຟຸມເຟືອຍ' ຖ້າພິສູດທີ່ມາບໍ່ໄດ້



*ຊູແອດເລີ່ມໃຊ້ກົດໝາຍອະນຸຍາດໃຫ້ຕຳຫຼວດຍຶດສິນຄ້າຟຸມເຟືອຍຈາກບຸກຄົນໄດ້ ຖ້າບໍ່ສາມາດພິສູດວ່າໄດ້ຮັບລາຍການເຫຼົ່ານັ້ນຢ່າງຖືກຕ້ອງ ເຖິງແມ່ນວ່າບຸກຄົນນັ້ນບໍ່ແມ່ນຜູ້ຖືກສົງໄສກໍ່ອາຊະຍາກຳກໍຕາມ.*

ສຳນັກຂ່າວ AFP ລາຍງານເມື່ອວັນທີ 9 ພະຈິກນີ້ວ່າ, ກົດໝາຍດັ່ງກ່າວມອບອຳນາດໃຫ້ຕຳຫຼວດຍຶດລົດໃຫຍ່, ໂມງຄຳ ແລະ ສິນຄ້າຟຸມເຟືອຍ ຈາກບຸກຄົນທີ່ຖືກສົງໄສວ່າມີສ່ວນກ່ຽວຂ້ອງກັບກຸ່ມອາຊະຍາກອນ ໂດຍເຊື່ອວ່າສິນຄ້າເຫຼົ່ານັ້ນຊື້ດ້ວຍເງິນທີ່ໄດ້ມາຈາກການກະທຳຜິດກົດໝາຍ ເຖິງແມ່ນບຸກຄົນດັ່ງກ່າວຍັງບໍ່ຖືກສົງໄສຢ່າງເປັນທາງການວ່າກ່ຽວຂ້ອງກັບອາຊະຍາກຳກໍຕາມ, ຕົວຢ່າງເຊັ່ນ ລົດກິລາ (sport car) ລາຄາແພງທີ່ຂັບໂດຍຄົນວ່າງງານທີ່ບໍ່ມີລາຍຮັບຖືກກົດໝາຍແລະບໍ່ສາມາດອະທິບາຍໄດ້ວ່າ ພວກເຂົາຊື້ມັນໄດ້ແນວໃດ?

ກົດໝາຍວ່າດ້ວຍການຍຶດຊັບສິນສະບັບໃໝ່ ຈະບັງຄັບໃຊ້ກັບຜູ້ທີ່ມີອາຍຸຕ່ຳກວ່າ 15 ປີອີກດ້ວຍ.

ອີງຕາມການປະເມີນຂອງເຈົ້າໜ້າທີ່ຊູແອດ, ມູນຄ່າທາງເສດຖະກິດຂອງກຸ່ມອາຊະຍາກຳທີ່ມີການຈັດຕັ້ງ ມີປະມານ 100-150 ຕື້ໂຄຣນາ (kronor) ປະມານ 9.3-14 ຕື້ໂດລາສະຫະລັດຕໍ່ປີ.

# ພັນທະມິດຝ່າຍຄ້ານຂອງ Mauritius ຊະນະການເລືອກຕັ້ງສະພານິຕິບັນຍັດ



ທ່ານ ນາວິນຈັນທຣາ ຣາມກູລາມ

(Xinhua) - ພັນທະມິດເພື່ອການປ່ຽນແປງ (Alliance for Change) ເຊິ່ງເປັນຝ່າຍຄ້ານທີ່ນຳພາໂດຍທ່ານ ນາວິນຈັນທຣາ ຣາມກູລາມ (Navinchandra Ramgoolam) ອະດີດນາຍົກລັດຖະມົນຕີຂອງສາທາລະນະລັດໂມຣິດ ຫຼື ມໍຣິຊຽດ ຊະນະການເລືອກຕັ້ງສະພານິຕິບັນຍັດຂອງປະເທດເກາະແຫ່ງນີ້ ທີ່ຈັດຂຶ້ນເມື່ອວັນອາທິດທີ 10 ພະຈິກຜ່ານມາ; ອີງຕາມຜົນການເລືອກຕັ້ງຄັ້ງສຸດທ້າຍທີ່ເປີດເຜີຍໃນຄືນວັນຈັນ, ພັນທະມິດຝ່າຍຄ້ານໄດ້ 60 ຈາກທັງໝົດ 62 ທີ່ນັ່ງ, ໃນຂະນະທີ່ພັນທະມິດປະຊາຊົນຂອງນາຍົກລັດຖະມົນຕີ ປຣາວິນ ຈູກໂນດ (Pravind Jugnauth) ບໍ່ໄດ້ແມ່ນແຕ່ທີ່ນັ່ງດຽວ.

ສະພາແຫ່ງຊາດຂອງໂມຣິດແມ່ນລະບົບສະພາດຽວ, ປະກອບດ້ວຍສະມາຊິກ 70 ທ່ານທີ່ມີອາຍຸການ 5 ປີ; ຜູ້ລົງຄະແນນສຽງຈະເລືອກຕັ້ງເອົາສະມາຊິກສະພາແຫ່ງຊາດ (ສສຊ) ໂດຍກົງ 62 ຄົນ, ໃນຂະນະທີ່ "ຜູ້ພ່າຍແພ້ທີ່ດີທີ່ສຸດ" ອີກ 8 ຄົນ ຈະໄດ້ຮັບການແຕ່ງຕັ້ງໃຫ້ເຕັມ 70 ທີ່ນັ່ງ.

ທ່ານ ຣາມກູລາມ, ອາຍຸ 77 ປີ, ແມ່ນລູກຊາຍຂອງນາຍົກລັດຖະມົນຕີຄົນທຳອິດຂອງໂມຣິດ ທ່ານ ຊີໂວຊາກູ ຣາມກູລາມ (Sivosagur Ramgoolam) ຜູ້ລ່ວງລັບ; ທ່ານໄດ້ກາຍເປັນຜູ້ນຳຂອງພັກແຮງງານໂມຣິດ ໃນເດືອນມິຖຸນາ 1991 ແລະໄດ້ຮັບເລືອກຕັ້ງເປັນສສຊ ໃນເດືອນກັນຍາ ໃນຖານະເປັນຜູ້ນຳຝ່າຍຄ້ານໃນສະພາແຫ່ງຊາດ, ທ່ານເຄີຍດຳລົງຕຳແໜ່ງນາຍົກລັດຖະມົນຕີ ແຕ່ປີ 1995-2000 ແລະ ແຕ່ປີ 2005-2014.

ຕາມການລາຍງານຂອງຄະນະກຳມະການການເລືອກຕັ້ງ, ຜູ້ມີສິດເລືອກຕັ້ງ 1,002,857 ຄົນ ໄດ້ໃຊ້ສິດປ່ອນບັດຢູ່ໜ່ວຍເລືອກຕັ້ງ 340 ແຫ່ງໃນທົ່ວປະເທດ.

## ເຈາະເລິກໂລກ: ລັດຖະບານສຽງສ່ວນໜ້ອຍຂອງ ອິຊິບະ ຍັງສືບຕໍ່ຢູ່ໃນເສັ້ນທາງທີ່ຫຍຸ້ງຍາກ ເຖິງແມ່ນວ່າຈະກັບຄືນມາເປັນນາຍົກລັດຖະມົນຕີ

# ແປ ແລະ ຮຽບຮຽງໂດຍ: ວິລະພັດ ພາບວິໄຊ

(ຊິນຮວາ) - ທ່ານ ຊິເງຣຸ ອິຊິບະ ນາຍົກລັດຖະມົນຕີຍີ່ປຸ່ນ ຍັງຮັກສາຕຳແໜ່ງຂອງຕົນໄວ້ໄດ້ໃນການລົງຄະແນນສຽງຮອບທີສອງ ເມື່ອວັນຈັນທີ 11 ພະຈິກຜ່ານມາ ເຊິ່ງເປັນການເລືອກຕັ້ງຄັ້ງທຳອິດໃນສະພາຜູ້ແທນລາດສະດອນ ໃນຮອບ 3 ທົດສະວັດ ແລະ ເນັ້ນໜັກເຖິງຄວາມຫຍຸ້ງຍາກທີ່ປະເຊີນກັບການເປັນຜູ້ນຳຂອງທ່ານ, ຂະນະທີ່ກຳລັງເດີນໜ້າຈັດຕັ້ງລັດຖະບານສຽງສ່ວນໜ້ອຍ ທ່າມກາງອຸປະສັກທີ່ເພີ່ມຂຶ້ນ.

ການລົງຄະແນນສຽງຮອບທຳອິດຂອງສະພາຕ່ຳເພື່ອເລືອກນາຍົກລັດຖະມົນຕີຄົນຕໍ່ໄປຂອງປະເທດ, ທ່ານ ອິຊິບະ ຂຶ້ນນຳແຕ່ຍັງບໍ່ໄດ້ຮັບສຽງສ່ວນຫຼາຍ, ເຮັດໃຫ້ມີການເລືອກຕັ້ງຮອບທີສອງກັບທ່ານໂຢຊິຮິໂກະໂນດະ (Yoshihiko Noda) ຫົວໜ້າພັກປະຊາທິປະໄຕລັດຖະທຳມະນູນແຫ່ງຍີ່ປຸ່ນ.

ທ່ານ ອິຊິບະ ອາຍຸ 67 ປີ ຊະນະດ້ວຍຄະແນນສຽງ 221 ຈາກ465ທີ່ນັ່ງໃນສະພາຜູ້ແທນລາດສະດອນ, ຂະນະທີ່ທ່ານໂນດະ ໄດ້ 160 ຄະແນນ; ແຕ່ບັນດານັກວິເຄາະການເມືອງເນັ້ນໜັກວ່າ ລັດຖະບານຂອງທ່ານຈະຕ້ອງອາໄສການຮ່ວມມືຈາກຝ່າຍຄ້ານຢ່າງໜັກ ເພື່ອຜ່ານຮ່າງກົດໝາຍທີ່ສຳຄັນ, ເນື່ອງຈາກສະຖານະພາບສຽງສ່ວນໜ້ອຍຂອງລັດຖະບານປະສົມທີ່ປົກຄອງປະເທດ ຈະຕ້ອງໄດ້ຮັບການສະໜັບສະໜູນຈາກພັກການເມືອງອື່ນໆໃນການຜ່ານກົດໝາຍ ແລະ ອະນຸມັດງົບປະມານ.

ພາຍຫຼັງຂຶ້ນດຳລົງຕຳແໜ່ງນາຍົກລັດຖະມົນຕີ, ທ່ານ ອິຊິບະ ໄດ້ສັບຊ້ອນຄະນະລັດຖະມົນຕີຊຸດໃໝ່ ໂດຍປ່ຽນພຽງລັດຖະມົນຕີທີ່ບໍ່ໄດ້ຮັບເລືອກຕັ້ງຄືນໃໝ່ໃນສະພາຜູ້ແທນລາດສະດອນ; ສິ່ງທ້າທາຍທີ່ສຳຄັນທີ່ສຸດສຳລັບຄະນະລັດຖະມົນຕີຊຸດໃໝ່ ແມ່ນການກຳນົດນະໂຍບາຍເສດຖະກິດ ແລະ ງົບປະມານຄືນໃໝ່, ພັກເສລີປະຊາທິປະໄຕ (LDP) ຂອງທ່ານອິຊິບະພວມສະແຫວງຫາການຮ່ວມມືຢ່າງແຂງຂັນກັບພັກປະຊາທິປະໄຕເພື່ອປະຊາຊົນ ເຊິ່ງໄດ້ສະແດງໃຫ້ເຫັນການຕອບຮັບໃນທາງບວກ. ທັງສອງພັກພວມປຶກສາຫາລືກ່ຽວກັບການປະຕິຮູບພາສີ ໂດຍມີຈຸດປະສົງທີ່ຈະສ້າງຕັ້ງ "ພັນທະມິດບາງສ່ວນ"(partialalliance)ເພື່ອຮ່ວມມືໃນນະໂຍບາຍສະເພາະ.

ແນວໃດກໍຕາມ, ຕາມການເຈລະຈາລະຫວ່າງພັກຕ່າງໆຄັ້ງຫຼ້າສຸດ, ຝ່າຍຄ້ານໄດ້ດຳລົງຕຳແໜ່ງປະທານກຳມາທິການ 7 ໃນຈຳນວນ 17 ຕຳແໜ່ງ ໃນສະພາຜູ້ແທນລາດສະດອນ ລວມທັງກຳມາທິການງົບປະມານ ທີ່ມີຄວາມສຳຄັນຢ່າງຍິ່ງຕໍ່ການພິຈາລະນາງົບປະມານ; ຄັ້ງຫຼ້າສຸດທີ່ຝ່າຍຄ້ານເປັນປະທານກຳມາທິການນີ້ ແມ່ນ 30 ປີຜ່ານມາ ເຊິ່ງຊີ້ໃຫ້ເຫັນເຖິງການປ່ຽນແປງຄັ້ງສຳຄັນໃນພູມີທັດທາງການເມືອງຂອງຍີ່ປຸ່ນ.

ທ່ານ ອະສືຊິ ໂຄເຄສື (Atsushi Koketsu) ສາດສະດາຈານກິດຕິມະສັກທີ່ມະຫາວິທະຍາໄລຢາມາກູຈິ(Yamaguchi) ກ່າວວ່າ ການເມືອງຍີ່ປຸ່ນຈະຄ່ອຍໆພັດທະນາຜ່ານການກວດສອບ ແລະ ຖ່ວງດຸນລະຫວ່າງພັກລັດຖະບານ ແລະ ພັກຝ່າຍຄ້ານ, ເນື່ອງຈາກການທີ່ພັກຝ່າຍຄ້ານເປັນປະທານກຳມາທິການງົບປະມານ ຖືເປັນການປ່ຽນແປງອັນໃຫຍ່ຫຼວງໃນວົງການການເມືອງຍີ່ປຸ່ນ.

ຮ້າຍແຮງໄປກວ່ານັ້ນ, ພັກ LDP ຍັງຕ້ອງຕໍ່ສູ້ກັບບັນຫາເລື່ອງສໍ້ໂກງກອງທຶນທີ່ຜິດກົດໝາຍ ເຊິ່ງຍັງເປັນພາລະຜູກພັນທີ່ບົ່ມຊ້ອນຢູ່; ບໍ່ດົນຫຼັງຈາກການເລືອກຕັ້ງສະພາຜູ້ແທນລາດສະດອນ, LDP ໄດ້ຕັດສິນໃຈໃຫ້ອະດີດເຈົ້າໜ້າທີ່ຂອງພັກທີ່ເຄີຍລົງສະໝັກຮັບເລືອກຕັ້ງເອກະລາດກັບມາດຳລົງຕຳແໜ່ງຄືນໃໝ່ພາຍຫຼັງປະເຊີນກັບການລົງໂທດທາງວິໄນ ເຊິ່ງສ້າງຄວາມບໍ່ພໍໃຈໃຫ້ປະຊາຊົນອີກຄັ້ງ.

ມີລາຍງານວ່າ, ບັນດາຝ່າຍຄ້ານ ພວມວາງແຜນການທີ່ຈະຮຽກຮ້ອງໃຫ້ມີການສືບສວນຄືນໃໝ່ກ່ຽວກັບເລື່ອງເສຍຫາຍດັ່ງກ່າວ ໂດຍຊຸກດັນໃຫ້ສະມາຊິກສະພາທີ່ຖືກກ່າວຫາເຂົ້າໃຫ້ການເປັນພະຍານຕໍ່ກຳມາທິການຈັນຍາບັນ (ethics committee); ຍັງບໍ່ເປັນທີ່ຈະແຈ້ງເທື່ອວ່າ ພັກ LDP ຈະສາມາດເອົາຊະນະເລື່ອງເສຍຫາຍນີ້ແລະຟື້ນຄືນຄວາມເຊື່ອໝັ້ນຂອງຜູ້ມີສິດເລືອກຕັ້ງໄດ້ຫຼືບໍ່.

## ສ.ເກົາຫຼີ ອະນຸຍາດໃຫ້ສືບສວນລັບອາຊະຍາກຳທາງເພດທາງດິຈິຕອນ ທີ່ແນໃສ່ຜູ້ໃຫຍ່




(AFP) - ວັນພະຫັດທີ 14 ພະຈິກຜ່ານມາ, ສະພາແຫ່ງຊາດ ສ.ເກົາຫຼີ ມີມະຕິຜ່ານຮ່າງກົດໝາຍສະບັບປັບປຸງ ເພື່ອອະນຸຍາດໃຫ້ດຳເນີນການສືບສວນລັບຄະດີອາຊະຍາກຳທາງເພດຜ່ານລະບົບດິຈິຕອນທີ່ແນໃສ່ກຸ່ມຜູ້ໃຫຍ່, ເປັນການເຄື່ອນໄຫວເພື່ອສະກັດກັ້ນການແຜ່ກະຈາຍຮູບພາບອະນາຈານທາງເພດປອມແບບລ້ຳເລີກ (deepfake) ທີ່ແຜ່ລາມທາງອອນລາຍ.

ໃນກອງປະຊຸມສະພາແຫ່ງຊາດທີ່ມີສະມາຊິກ 300 ທ່ານ, ຮ່າງກົດໝາຍປັບປຸງກົດໝາຍວ່າດ້ວຍຄະດີພິເສດກ່ຽວກັບການລົງໂທດອາຊະຍາກຳທາງເພດ (Bill to revise the Act on Special Cases Concerning the Punishment of Sexual Crimes) ໄດ້ຮັບຄະແນນສຽງເຫັນດີ 272 ຈາກສະມາຊິກສະພາແຫ່ງຊາດ (ສສຊ) 273 ທ່ານ ທີ່ເຂົ້າຮ່ວມກອງປະຊຸມ.

ປັດຈຸບັນ, ການສືບສວນລັບຍັງຈຳກັດຢູ່ໃນອາຊະຍາກຳທາງເພດປອມແບບລ້ຳເລີກທີ່ແນໃສ່ເດັກນ້ອຍແລະໄວໜຸ່ມ, ແຕ່ຮ່າງກົດໝາຍສະບັບໃໝ່ ຈະຂະຫຍາຍຂອບເຂດການສືບສວນລັບຂອງຕຳຫຼວດ ກວມເອົາແມ່ຍິງທຸກໄວ.

ຂັ້ນຕອນນີ້ ຈະຕ້ອງມີຄຳຮ້ອງຈາກໄອຍະການ ແລະການອະນຸມັດຈາກສານ ເພື່ອຮັບປະກັນວ່າຂະບວນການດັ່ງກ່າວຖືກຕ້ອງຕາມກົດໝາຍ.

ສະພາແຫ່ງຊາດ ຍັງໄດ້ຜ່ານຮ່າງກົດໝາຍວ່າດ້ວຍການສົ່ງເສີມການນຳໃຊ້ເຄືອຂ່າຍຂໍ້ມູນ ແລະການສື່ສານ ແລະການປົກປ້ອງຂໍ້ມູນ (ປັບປຸງ) ເຮັດໃຫ້ອົງການບັງຄັບໃຊ້ກົດໝາຍຂອງປະເທດ ມີສິດອຳນາດຮ້ອງຂໍໃຫ້ຄະນະກຳມະການການສື່ສານແຫ່ງຊາດເກົາຫຼີ (Korea Communications Commission - KCC) ເຊິ່ງເປັນອົງການຄຸ້ມຄອງສື່ມວນຊົນສູງສຸດ ລຶບຮູບພາບອະນາຈານທາງເພດປອມແບບລ້ຳເລີກອອກໄປ, ກົດໝາຍສະບັບນີ້ ໄດ້ຮັບການເຫັນດີຈາກ ສສຊ 281 ທ່ານ.

ພາຍໃຕ້ແຜນການຂ້າງເທິງ, ລັດຖະບານ ຈະປັບປຸງກົດໝາຍວ່າດ້ວຍທຸລະກິດໂທລະຄົມ ເພື່ອເຮັດໃຫ້ເວທີ (platform) ຕ່າງໆທີ່ມີເນື້ອໃນປອມແບບລ້ຳເລີກ ສາມາດບລັອກຮູບພາບ ແລະຄລິບວິດີໂອອະນາຈານທາງເພດໄດ້ ກ່ອນທີ່ຈະຮ້ອງຂໍ KCC ກວດຄືນເນື້ອໃນດັ່ງກ່າວ; ເພື່ອຫຼຸດຜ່ອນໄພອັນຕະລາຍ ແລະ ປົກປ້ອງຜູ້ເຄາະຮ້າຍ, ເວທີເຫຼົ່ານີ້ຕ້ອງເອົາເນື້ອໃນທີ່ຜິດກົດໝາຍອອກພາຍໃນ 24 ຊົ່ວໂມງຕາມຄຳຮ້ອງຂໍຂອງອົງການຄວບຄຸມການອອກອາກາດ.

ຜູ້ທີ່ຖືກຈັບໄດ້ວ່າມີການຄອບຄອງ, ຊື້, ເກັບຮັກສາ ຫຼື ແມ່ນແຕ່ເບິ່ງເນື້ອໃນລາມົກປອມແບບລ້ຳເລີກ ຈະປະເຊີນກັບໂທດຕິດຄຸກເຖິງ 3 ປີ ຫຼື ຖືກປັບໃໝເຖິງ 30 ລ້ານວອນ (ປະມານ 21,490 ໂດລາສະຫະລັດ); ຜູ້ທີ່ສ້າງ ຫຼື ແກ້ໄຂວິດີໂອ ຫຼື ຮູບພາບລາມົກອະນາຈານແລະເຜີຍແຜ່ທາງອອນລາຍ ອາດຖືກລົງໂທດຕິດຄຸກສູງສຸດ 7 ປີ, ເມື່ອທຽບກັບ 5 ປີ ຕາມກົດໝາຍປັດຈຸບັນ; ຜູ້ທີ່ບໍ່ມີຄວາມຕັ້ງໃຈທີ່ຈະເຜີຍແຜ່ທາງອອນລາຍ ກໍອາດຖືກລົງໂທດເຊັ່ນກັນ.

ຜູ້ທີ່ສວຍໃຊ້ຫາຜົນປະໂຫຍດຈາກອາຊະຍາກຳທາງເພດປອມແບບລ້ຳເລີກທີ່ກ່ຽວຂ້ອງກັບຜູ້ເຍົາ ໂດຍຜ່ານການຂູ່ເອົາເງິນ (blackmail) ຫຼື ການບີບບັງຄັບ ຈະຖືກຕິດຄຸກສູງສຸດ 3 ແລະ 5 ປີ ຕາມລຳດັບ.

## ປ້ອງກັນບໍ່ໃຫ້ມີຜູ້ຄຶກໂດດດ່ຽວປ່ຽວພອຍ

❖ ວິເສດ ສະແຫວງສຶກສາ

ໃນປັດຈຸບັນ ໂລກ ຫຼື ພະຍາດຊຶມເສົ້າຍ້ອນສະພາບຖືກໂດດດ່ຽວດຽວດາຍທາງດ້ານຮ່າງກາຍ ແລະ ຈິດໃຈຂອງຄົນເຮົາ ໃນຍຸກໄຮເທັກນີ້ ພວມກາຍເປັນບັນຫາທ້າທາຍໃໝ່ໃນທຸກໆປະເທດ ບໍ່ວ່າຈະຮັ່ງ ຫຼື ທຸກ ແຕ່ວ່າ... ພະຍາດນີ້ມີທ່າອຽງລະບາດຂຶ້ນຫຼາຍໃນບັນດາປະເທດທີ່ລະດັບການພັດທະນາທີ່ກ້າວໜ້າຮັ່ງມີສີສຸກ. ຄວາມໂດດດ່ຽວມີອຳນາດທຳລາຍຈິດໃຈ, ຄວາມຫວັງ ເຮັດໃຫ້ຮູ້ສຶກຈົນຕາແຈຍອມແພ້ໂດຍງ່າຍຕໍ່ອຸປະສັກໃນຊີວິດ.

ໃນບົດນີ້ ຂໍຍົກຕົວຢ່າງກ່ຽວກັບພະຍາດທີ່ເກີດຈາກສະພາບທີ່ຖືກໂດດດ່ຽວປ່ຽວພອຍ ໃນ ສ.ເກົາຫຼີ ປະເທດໃນອາຊີຂອງພວກເຮົາ, ສ.ເກົາຫຼີ ເປັນປະເທດອຸດສາຫະກຳຂະຫຍາຍໂຕຂັ້ນຫົວແຖວຂອງໂລກ ແຕ່ພັດປະເຊີນກັບສິ່ງທ້າທາຍຈາກຄວາມໂດດດ່ຽວປ່ຽວພອຍຂອງຄົນໃນສັງຄົມ ເຖິງຂັ້ນຕ້ອງມີມາດຕະການແກ້ໄຂຢ່າງຮີບດ່ວນ. ມາດຕະການແກ້ໄຂພະຍາດໂດດດ່ຽວປ່ຽວພອຍໃນສັງຄົມສ.ເກົາຫຼີ ນັ້ນ ຖືກປະຕິບັດນັບແຕ່ປີ 2025 ເປັນຕົ້ນໄປໂດຍຈະເລີ່ມຈາກນະຄອນຫຼວງເຊອູນກ່ອນ; ຂ່າວຕ່າງປະເທດໃນທ້າຍເດືອນຕຸລາປີນີ້ ໃຫ້ຮູ້ວ່າ: ທາງການນະຄອນຫຼວງເຊອູນ ຈະເປີດບໍລິການສູນໂທລະສັບສາຍດ່ວນ ເພື່ອຊ່ວຍເຫຼືອປະຊາຊົນທີ່ປະເຊີນກັບສະພາບໂດດດ່ຽວດຽວດາຍທາງກາຍ ແລະ ຈິດໃຈ. ນັບແຕ່ປີໜ້າເປັນຕົ້ນໄປ ໂດຍຈະນຳໃຊ້ງົບປະມານສູງເຖິງ 451.3 ຕື້ວອນ (ສະກຸນເງິນຂອງ ສ.ເກົາຫຼີ) ທີ່ຈະກວມເອົາການໃຊ້ຈ່າຍເປັນເວລາ 5 ປີທຳອິດ. ສູນໂທລະສັບສາຍດ່ວນນີ້ ຈະເຮັດໜ້າທີ່ຕິດຕໍ່ພົວພັນໃຫ້ຄຳປຶກສາຫາລື... ໃຫ້ກຳລັງໃຈດ້ວຍລາຍການບັນເທົາເອົາໃຈ ແລະ ຊ່ວຍແກ້ໄຂບັນຫາສຳລັບຜູ້ທີ່ມີສະພາບໂດດດ່ຽວ. ສູນທີ່ວ່ານີ້ ຈະໃຫ້ການບໍລິການ 24 ຊົ່ວໂມງຕໍ່ວັນ ໂດຍບໍ່ມີວັນພັກ. ນອກຈາກນັ້ນ, ທາງການນະຄອນຫຼວງເຊອູນ ຍັງຈະເປີດບໍລິການຮ້ານສະດວກຊື້ທີ່ເປັນຈຸດພົບປະໃຫ້ທຸກຄົນໄດ້ຮ່ວມກິດຈະກຳມ່ວນຊື່ນຜ່ອນຄາຍອີກດ້ວຍ.

ທ່ານ ໂອເຊຮຸນ ເຈົ້າຄອງນະຄອນຫຼວງເຊອູນ ໃຫ້ຮູ້ວ່າ: ຄວາມຮູ້ສຶກໂດດດ່ຽວປ່ຽວພອຍຂອງຊາວນະຄອນຫຼວງນັ້ນ ເກີດມາຈາກການແຍກຕົວອອກຈາກສັງຄົມ, ດັ່ງນັ້ນ 5 ປີທຳອິດນີ້ ຈະສຸມໃສ່ປະຕິບັດຄຳຂວັນ "ລາກ່ອນຄວາມໂດດດ່ຽວ" ເຊິ່ງທ່ານເຊື່ອວ່າຈະຊ່ວຍໃຫ້ບໍ່ມີໃຜໃນເຊອູນ ຖືກປ່ອຍປະໃຫ້ຫງອຍເຫງົາເສົ້າໂສກຍ້ອນສະພາບໂດດດ່ຽວປ່ຽວພອຍອີກເລີຍ.

ສ.ເກົາຫຼີ ເປັນປະເທດໜຶ່ງທີ່ມີຄົນຂ້າໂຕຕາຍຫຼາຍທີ່ສຸດໃນໂລກ, ແນ່ນອນເຫດຮ້າຍດັ່ງກ່າວ ສ່ວນໜຶ່ງກໍຄືເກີດມາຈາກຄວາມຮູ້ສຶກໂດດດ່ຽວສິ້ນຫວັງ ຍ້ອນສາລະພັດບັນຫາ ລວມທັງການແຍກຕົວອອກຈາກສັງຄົມຂອງຄົນ. ສະຫຼຸບຄວາມແລ້ວ, ຄວາມຈະເລີນກ້າວໜ້າທາງດ້ານວັດຖຸນັ້ນ ຕ້ອງໄປສົມຄູ່ກັບຄວາມອົບອຸ່ນທາງດ້ານຈິດໃຈ ແລະ ຄວາມຫວັງ ຈຶ່ງຈະເອີ້ນວ່າ ເປັນສັງຄົມສີວິໄລໄດ້.

# ປະມວນພາບບັນຍາກາດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX





























**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ